ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 05 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 3 ກໍລະກົດ 2007

# ກົດໝາຍ

# ວ່າດ້ວຍການກວດສອບ

## ພາກທີ I

## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ກົດໝາຍວ່າດ້ວຍການກວດສອບ ກໍານົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການເຄື່ອນໄຫວກວດສອບ ແນໃສ່ເຮັດໃຫ້ການຄຸ້ມຄອງ, ການນໍາໃຊ້ທຶນຮອນຂອງລັດ, ການເຄື່ອນໄຫວຂອງຫົວໜ່ວຍທຸລະກິດ ແລະ ຫົວໜ່ວຍທີ່ບໍ່ສະແຫວງຫາຜົນກໍາໄລ ຖືກຕ້ອງຕາມລະບຽບກົດໝາຍ, ມີປະສິດທິຜົນ, ປະຢັດ, ສະກັດກັ້ນປາກົດການຫຍໍ້ທໍ້ທາງດ້ານການເງິນ ແລະ ງົບປະມານແຫ່ງລັດ, ປະກອບສ່ວນເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ ມີຄວາມເຂັ້ມແຂງ, ໂປ່ງໃສ, ສົ່ງເສີມການລົງທຶນພາຍໃນ ແລະຕ່າງປະເທດ ແລະຊຸກຍູ້ ການພັດທະນາເສດຖະກິດ-ສັງຄົມ ໃຫ້ນັບມື້ນັບຂະຫຍາຍຕົວແລະໝັ້ນຄົງ.

**ມາດຕາ 2. ການກວດສອບ**

ການກວດສອບ ແມ່ນຂະບວນການເກັບກໍາຂໍ້ມູນ ແລະຫຼັກຖານຕົວຈິງ ກ່ຽວກັບເປົ້າໝາຍຖືກກວດສອບ ເພື່ອຢັ້ງຢືນກ່ຽວກັບຄວາມຖືກຕ້ອງຕາມຕົວຈິງ, ຕາມລະບຽບກົດໝາຍ ຂອງເອກະສານລາຍງານການເງິນ ພ້ອມທັງປະເມີນຄວາມສອດຄ່ອງທາງດ້ານລະບຽບກົດໝາຍ, ປະສິດທິຜົນໃນການຄຸ້ມຄອງ, ການນໍາໃຊ້ທຶນຮອນຂອງລັດ, ການເຄື່ອນໄຫວຂອງຫົວໜ່ວຍທຸລະກິດ ແລະ ຫົວໜ່ວຍທີ່ບໍ່ສະແຫວງຫາຜົນກໍາໄລ.

ການກວດສອບ ມີສອງພາກສ່ວນຄື: ການກວດສອບແຫ່ງລັດ ແລະ ການກວດສອບເອກະລາດ.

**ມາດຕາ 3. ການອະທິບາຍຄໍາສັບ**

ຄໍາສັບທີ່ນໍາໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ທຶນຮອນຂອງລັດ ໝາຍເຖິງ** ງົບປະມານ, ເງິນ ຫຼື ຊັບສິນຂອງລັດ;
2. **ຊັບສິນຂອງລັດ ໝາຍເຖິງ** ຊັບສິນ ທີ່ງົບປະມານແຫ່ງລັດ ສະໜອງໃຫ້ໂດຍກົງ ຫຼື ມີຕົ້ນກໍາເນີດມາຈາກງົບປະມານແຫ່ງລັດ ຊຶ່ງເປັນກໍາມະສິດ ແລະ ຢູ່ພາຍໃຕ້ການຄຸ້ມຄອງຂອງລັດ;

3. **ການກວດສອບເອກະລາດ ໝາຍເຖິງ** ການກວດສອບພາຍນອກ ທີ່ດໍາເນີນໂດຍວິສາຫະກິດກວດສອບ ຫຼື ນັກກວດສອບອິດສະລະ ທີ່ໄດ້ຈົດທະບຽນດໍາເນີນການກວດສອບເອກະລາດ ແລະ ຂຶ້ນທະບຽນວິສາຫະກິດຢ່າງຖືກຕ້ອງຕາມກົດໝາຍ;
4. **ເປົ້າໝາຍຖືກກວດສອບ ໝາຍເຖິງ** ການຈັດຕັ້ງທີ່ຄຸ້ມຄອງ, ນໍາໃຊ້ທຶນຮອນຂອງລັດ, ບັນດາຫົວໜ່ວຍທຸລະກິດ ແລະຫົວໜ່ວຍທີ່ບໍ່ສະແຫວງຫາຜົນກໍາໄລ;
5. **ຫົວໜ່ວຍທີ່ບໍ່ສະແຫວງຫາຜົນກໍາໄລ ໝາຍເຖິງ** ການຈັດຕັ້ງສັງຄົມ, ມູນນິທິ ຫຼື ກອງທຶນຕ່າງໆທີ່ເຄື່ອນໄຫວຮັບໃຊ້ສາທາລະນະປະໂຫຍດ ຫຼື ຊ່ວຍເຫຼືອສັງຄົມ;
6. **ຄໍາແນະນໍາກວດສອບ ໝາຍເຖິງ** ຄໍາເຫັນຂອງອົງການກວດສອບສູນກາງ, ອົງການກວດສອບປະຈໍາພາກ ຕໍ່ບັນດາຈຸດອ່ອນ, ຂໍ້ຄົງຄ້າງ ແລະວິທີການແກ້ໄຂ ຊຶ່ງສະແດງອອກໃນບົດສະຫຼຸບຜົນການກວດສອບ ເພື່ອໃຫ້ເປົ້າໝາຍຖືກກວດສອບ ແລະ ອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງແກ້ໄຂ;
7. **ຈົດໝາຍແນະນໍາ ໝາຍເຖິງ** ເອກະສານຕິດຄັດກັບບົດລາຍງານການກວດສອບ ຂອງຫົວໜ່ວຍກວດສອບອິດສະລະ ເພື່ອແນະນໍາວິທີການ ແລະ ມາດຕະການແກ້ໄຂໃຫ້ຫົວໜ່ວຍຖືກກວດສອບ;
8. **ຄະນະກວດສອບແຫ່ງລັດ ໝາຍເຖິງ** ໜ່ວຍງານກວດສອບຂອງລັດ ທີ່ຖືກແຕ່ງຕັ້ງໃຫ້ດໍາເນີນການກວດສອບແຫ່ງລັດ;
9. **ບົດສະຫຼຸບຜົນການກວດສອບ ໝາຍເຖິງ** ເອກະສານຂອງອົງການກວດສອບແຫ່ງລັດ ທີ່ຕີລາຄາ, ຢັ້ງຢືນ ແລະ ສະຫຼຸບກ່ຽວກັບເນື້ອໃນທີ່ໄດ້ຜ່ານການກວດສອບ;
10. **ຜູ້ຕົກລົງໃຫ້ມີການກວດສອບແຫ່ງລັດ ໝາຍເຖິງ** ປະທານອົງການກວດສອບສູນກາງ ຫຼື ຫົວໜ້າອົງການກວດສອບປະຈໍາພາກ;
11. **ຜູ້ບໍລິຫານ ໝາຍເຖິງ** ເຈົ້າຂອງບໍລິສັດ, ຜູ້ອໍານວຍການ ແລະ ສະພາຜູ້ອໍານວຍການ ຫຼື ອົງການນໍາພາລວມໝູ່ອື່ນໆ ທີ່ຄຸ້ມຄອງຫົວໜ່ວຍຖືກກວດສອບ ຕາມກົດໝາຍວ່າດ້ວຍ ວິສາຫະກິດ.

### ມາດຕາ 4. ນະໂຍບາຍຂອງລັດຕໍ່ການກວດສອບ

ລັດສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ມີການກວດສອບ ຢ່າງເປັນເອກະລາດ ແລະ ເຂັ້ມງວດ ຕໍ່ທຸກການເຄື່ອນໄຫວຂອງເປົ້າໝາຍຖືກກວດສອບ ເພື່ອໃຫ້ມີຄວາມໂປ່ງໃສ, ຖືກຕ້ອງຕາມກົດໝາຍ ແລະ ມີປະສິດທິຜົນ.

ລັດລົງທຶນພັດທະນາທາງດ້ານເຕັກໂນໂລຢີ, ຂໍ້ມູນຂ່າວສານ, ສິ່ງປຸກສ້າງ, ພາຫະນະ ແລະ ອຸປະກອນຕ່າງໆ ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດວຽກງານກວດສອບແຫ່ງລັດ.

### ມາດຕາ 5. ຫຼັກການເຄື່ອນໄຫວກວດສອບ

ການເຄື່ອນໄຫວກວດສອບແຫ່ງລັດ ຕ້ອງປະຕິບັດຕາມຫຼັກການດັ່ງນີ້:

1. ເປັນເອກະລາດໃນເວລາ ດໍາເນີນການກວດສອບ ແລະ ພິຈາລະນາຜົນຂອງການກວດສອບ;
2. ປະຕິບັດຕາມກົດໝາຍ;
3. ອີງໃສ່ຂໍ້ມູນຫຼັກຖານຕົວຈິງ;

4. ໂປ່ງໃສ;
5. ສັດຊື່ບໍລິສຸດ.

ການກວດສອບເອກະລາດ ຕ້ອງປະຕິບັດຕາມຫລັກການ ດັ່ງນີ້ :

1. ຜູ້ກວດສອບ ຕ້ອງມີຄຸນວຸດທິພຽງພໍ ແລະ ມີຄວາມສາມາດປະຕິບັດງານ ໃນຖານະຜູ້ກວດສອບມືອາຊີບ;
2. ໃນການປະຕິບັດຂໍ້ຜູກພັນດ້ານການກວດສອບ ຕ້ອງມີຄວາມເປັນເອກະລາດ;
3. ໃນເວລາ ດຳເນີນການກວດສອບ ແລະ ສ້າງບົດລາຍງານການກວດສອບ ຕ້ອງຍຶດໝັ້ນໃນຈິດສຳນຶກທາງດ້ານວິຊາຊີບ;
4. ໃນການດຳເນີນການກວດສອບ ຕ້ອງມີການວາງແຜນເປັນຢ່າງດີ, ມີການແບ່ງງານໃນໜ່ວຍງານກວດສອບ ແລະ ມີການຄວບຄຸມງານຢ່າງເຂັ້ມງວດ;
5. ຜູ້ກວດສອບ ຕ້ອງມີຄວາມເຂົ້າໃຈຢ່າງພຽງພໍ ກ່ຽວກັບລະບົບການຄວບຄຸມພາຍໃນຂອງຫົວໜ່ວຍຖືກກວດສອບ ເພື່ອວາງແຜນ ແລະ ກຳນົດເນື້ອໃນ, ເວລາ ແລະ ຂອບເຂດການກວດສອບ ທີ່ຈະຕ້ອງດຳເນີນ;
6. ຜ່ານການກວດກາຕົວຈິງ, ການສັງເກດ, ການສອບຖາມ ແລະການຢືນຢັນຈາກພາກສ່ວນທີ່ກ່ຽວຂ້ອງ ຕ້ອງມີຫລັກຖານທີ່ໜ້າເຊື່ອຖືຢ່າງພຽງພໍ ເພື່ອໃຫ້ມີພື້ນຖານໜັກແໜ້ນ ໃນການປະກອບຄຳເຫັນຕໍ່ເອກະສານລາຍງານການເງິນທີ່ກວດສອບ;
7. ຂໍ້ມູນຢູ່ໃນເອກະສານລາຍງານການເງິນ ຕ້ອງເປີດເຜີຍຢ່າງພຽງພໍ ເວັ້ນເສຍແຕ່ ໄດ້ກຳນົດໄວ້ຢ່າງອື່ນ;
8. ບົດລາຍງານການກວດສອບ ຕ້ອງກຳນົດວ່າເອກະສານລາຍງານການເງິນ ໄດ້ສະແດງອອກໂດຍຖືກຕ້ອງຕາມຫລັກການບັນຊີ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການບັນຊີ ຫຼື ບໍ່;
9. ບົດລາຍງານການກວດສອບ ຕ້ອງເວົ້າເຖິງກໍລະນີທີ່ບໍ່ປະຕິບັດຕາມຫລັກການແບບຖາວອນໃນປີການບັນຊີທີ່ກວດສອບ ໂດຍສົມທຽບໃສ່ປີຜ່ານມາ;
10. ບົດລາຍງານການກວດສອບ ຕ້ອງສະແດງຄວາມເຫັນຢ່າງສັງລວມ ກ່ຽວກັບເອກະສານລາຍງານການເງິນ, ຄວາມຖືກຕ້ອງຕາມລະບຽບກົດໝາຍ, ຜົນການຈັດຕັ້ງປະຕິບັດງານ ຫລື ເວົ້າເຖິງກໍລະນີທີ່ບໍ່ສາມາດຢັ້ງຢືນໄດ້ ພ້ອມທັງຊີ້ແຈງສາເຫດ.

**ມາດຕາ 6. ມາດຕະຖານການກວດສອບ**

ມາດຕະຖານການກວດສອບແຫ່ງລັດ ແມ່ນບ່ອນອີງພື້ນຖານໃນການນຳໃຊ້ ແລະ ຕີລາຄາຄຸນນະພາບຂອງການກວດສອບ.

ມາດຕະຖານການກວດສອບແຫ່ງລັດ ປະກອບດ້ວຍ:

1. ຫຼັກການເຄື່ອນໄຫວກວດສອບ;
2. ລະບຽບການກວດສອບ;
3. ຄຸນສົມບັດ, ຄວາມຮູ້, ຄວາມສາມາດຂອງນັກກວດສອບ.

ເນື້ອໃນລະອຽດຂອງມາດຕະຖານການກວດສອບແຫ່ງລັດ ແມ່ນຄະນະປະຈຳສະພາແຫ່ງຊາດເປັນຜູ້ຕົກລົງ ຕາມການສະເໜີຂອງປະທານອົງການກວດສອບສູນກາງ.

ມາດຕະຖານການກວດສອບເອກະລາດ ແມ່ນລະບຽບການ ທີ່ເປັນບ່ອນອີງໃຫ້ຜູ້ກວດສອບ ໃນການດຳເນີນວຽກງານກວດສອບເອກະລາດ.

ມາດຕະຖານກວດສອບເອກະລາດ ປະກອບດ້ວຍ:

1. ມາດຕະຖານທົ່ວໄປ ກ່ຽວກັບ ຄຸນວຸດທິຂອງຜູ້ກວດສອບອິດສະລະ;
2. ມາດຕະຖານການປະຕິບັດງານໃນພາກສະໜາມ;
3. ມາດຕະຖານການລາຍງານ.

ເນື້ອໃນລະອຽດຂອງມາດຕະຖານການກວດສອບເອກະລາດ ແມ່ນນາຍົກລັດຖະມົນຕີເປັນຜູ້ຕົກລົງ ຕາມການສະເໜີ ຂອງລັດຖະມົນຕີວ່າການກະຊວງການເງິນ.

**ມາດຕາ 7. ຄຸນປະໂຫຍດຂອງບົດສະຫຼຸບຜົນການກວດສອບ**

**ບົດສະຫຼຸບຜົນການກວດສອບແຫ່ງລັດ ມີຄຸນປະໂຫຍດດັ່ງນີ້:**

- ສະພາແຫ່ງຊາດ ນຳໃຊ້ເຂົ້າໃນການພິຈາລະນາ, ຮັບຮອງເອົາແຜນງົບປະມານແຫ່ງລັດ, ຕົວເລກແບ່ງປັນງົບປະມານແຫ່ງລັດ, ແຜນງານ ແລະ ໂຄງການຊຶ່ງມີຄວາມສຳຄັນລະດັບຊາດທີ່ນຳໃຊ້ງົບປະມານແຫ່ງລັດ; ນຳໃຊ້ເຂົ້າໃນການພິຈາລະນາ, ຮັບຮອງເອົາການສະຫຼຸບຊາດຕົວ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳສົກປີ ແລະ ການຕິດຕາມກວດກາການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ, ນະໂຍບາຍການເງິນ-ເງິນຕາຂອງລັດ;
- ອົງການບໍລິຫານ ແລະ ອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງ ນຳໃຊ້ເຂົ້າໃນວຽກງານຄຸ້ມຄອງບໍລິຫານ ແລະການຈັດຕັ້ງປະຕິບັດໜ້າທີ່ຂອງຕົນ ລວມທັງວຽກງານກວດກາ;
- ສານປະຊາຊົນ, ອົງການໄອຍະການປະຊາຊົນ ແລະອົງການສືບສວນ-ສອບສວນ ນຳໃຊ້ເປັນຂໍ້ມູນ, ຫຼັກຖານໃນການດຳເນີນຄະດີ;
- ອົງການຈັດຕັ້ງຄຸ້ມຄອງເປົ້າໝາຍຖືກກວດສອບ ນຳໃຊ້ ເພື່ອສຶກສາອົບຮົມ ຫຼື ລົງວິໄນຕໍ່ເປົ້າໝາຍຖືກກວດສອບ;
- ເປົ້າໝາຍຖືກກວດສອບ ນຳໃຊ້ເປັນບ່ອນອີງເພື່ອຢັ້ງຢືນ ແລະ ເສີມຂະຫຍາຍປະສິດທິຜົນຂອງການເຄື່ອນໄຫວ ແລະ ປັບປຸງແກ້ໄຂກ່ຽວກັບຈຸດອ່ອນ, ຂໍ້ຄົງຄ້າງ ຂອງຕົນ ທີ່ສະແດງອອກຢູ່ໃນບົດສະຫຼຸບຜົນການກວດສອບ.

**ບົດສະຫຼຸບຜົນການກວດສອບເອກະລາດ ມີຄຸນປະໂຫຍດ ດັ່ງນີ້:**

- ຜູ້ຖືຮຸ້ນ ນຳໃຊ້ເພື່ອເປັນພື້ນຖານ ໃຫ້ແກ່ການພິຈາລະນາຮັບຮອງເອົາບົດສະຫລຸບຜົນການເຄື່ອນໄຫວຜ່ານມາ ແລະ ການວາງແຜນການປີຕໍ່ໄປ;
- ຜູ້ບໍລິຫານ ນຳໃຊ້ເພື່ອສຳຫລວດຄືນດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ ແລະ ພິຈາລະນາປັບປຸງແກ້ໄຂ;
- ນັກລົງທຶນ ນຳໃຊ້ເພື່ອປະເມີນຜົນເບິ່ງວ່າຫົວໜ່ວຍຖືກກວດສອບທີ່ກ່ຽວຂ້ອງ ໄດ້ມີການຄຸ້ມຄອງດີ ຫລື ບໍ່ ເພື່ອຕັດສິນໃຈໃນການເຂົ້າຮ່ວມທຶນ;
- ຜູ້ໃຫ້ກູ້ຢືມ, ຜູ້ໃຫ້ທຶນ, ເຈົ້າຂອງໂຄງການ ນຳໃຊ້ເພື່ອສຶກສາປະສິດທິຜົນ ກ່ຽວກັບການຄຸ້ມຄອງວ່າຖືກຕ້ອງຕາມແຜນການ ທີ່ໄດ້ວາງໄວ້ ຫລື ບໍ່ ແລະ ຄວາມສາມາດໃນການຊຳລະເງິນຄືນ;

- ຜູ້ກວດສອບຄົນອື່ນ ນຳໃຊ້ເພື່ອເປັນພື້ນຖານໃຫ້ແກ່ການຕິດຕາມ ການປະຕິບັດຂໍ້ແນະນຳຂອງ ຜູ້ກວດສອບຄົນກ່ອນ ແລະ ເປັນຈຸດເລີ່ມຕົ້ນໃນການວາງແຜນ ແລະ ກວດສອບໃນປີທີ່ຖືກມອບໝາຍໃຫ້ກວດສອບ;
- ອົງການບໍລິຫານ ແລະ ອົງການຈັດຕັ້ງອື່ນ ທີ່ກ່ຽວຂ້ອງ ເຊັ່ນ : ລັດຖະການສ່ວຍສາອາກອນ ນຳໃຊ້ເພື່ອຕີລາຄາຄວາມໜ້າເຊື່ອຖືໄດ້ ຂອງລະບົບຂໍ້ມູນຂ່າວສານ ແລະ ພື້ນຖານການຄິດໄລ່ເກັບອາກອນ, ນອກນັ້ນ ຍັງເປັນພື້ນຖານໃຫ້ແກ່ການສະໜອງຂໍ້ມູນຂ່າວສານສະຖິຕິ;
- ສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ ນຳໃຊ້ເພື່ອເປັນຫຼັກຖານໃນການດຳເນີນຄະດີ.

**ມາດຕາ 8. ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ:

1. ເປົ້າໝາຍຖືກກວດສອບ;
2. ອົງການກວດສອບແຫ່ງລັດ;
3. ກະຊວງການເງິນ;
4. ຫົວໜ່ວຍກວດສອບອິດສະລະ;
5. ການຈັດຕັ້ງ ແລະ ບຸກຄົນອື່ນ ທີ່ກ່ຽວຂ້ອງກັບການກວດສອບ.

**ມາດຕາ 9. ການພົວພັນຮ່ວມມືສາກົນ**

ລັດສົ່ງເສີມໃຫ້ມີການພົວພັນ, ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ເຕັກໂນໂລຢີ, ຝຶກອົບຮົມ, ຍົກລະດັບຄວາມຮູ້ຄວາມສາມາດ ດ້ານວິຊາຊີບກວດສອບ ເພື່ອພັດທະນາວຽກງານກວດສອບໃຫ້ເຂັ້ມແຂງ ແລະ ທັນສະໄໝ.

# ພາກທີ II
# ການເຄື່ອນໄຫວກວດສອບ

## ໝວດທີ 1
## ການກວດສອບແຫ່ງລັດ

### ກ. ຂັ້ນຕອນຂອງການກວດສອບ

**ມາດຕາ 10. ຂັ້ນຕອນຂອງການກວດສອບ**

ການກວດສອບ ຕ້ອງປະຕິບັດຕາມຂັ້ນຕອນດັ່ງນີ້:

1. ການຕົກລົງກວດສອບ;
2. ການແຈ້ງຂໍ້ຕົກລົງກວດສອບ;
3. ການກະກຽມການກວດສອບ;
4. ການດຳເນີນການກວດສອບ;

5. ການສະຫຼຸບ ແລະ ສິ່ງບົດສະຫຼຸບ ຜົນການກວດສອບ;
6. ການເປີດເຜີຍຜົນການກວດສອບ.

**ມາດຕາ 11. ບ່ອນອີງຂອງການອອກຂໍ້ຕົກລົງກວດສອບ**

ການຕົກລົງກວດສອບ ແມ່ນອີງໃສ່:

1. ແຜນການກວດສອບປະຈຳສົກປີ ຂອງອົງການກວດສອບແຫ່ງລັດ;
2. ຄຳສະເໜີ ຂອງກອງປະຊຸມສະພາແຫ່ງຊາດ ຫຼື ຄະນະປະຈຳສະພາແຫ່ງຊາດ;
3. ຄຳສະເໜີ ຂອງລັດຖະບານ ຫຼື ນາຍົກລັດຖະມົນຕີ;
4. ຄຳສະເໜີຂອງອົງການຈັດຕັ້ງລັດ, ້ການຄຸ້ມຄອງເປົ້າໝາຍຖືກກວດສອບ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ຫຼື ອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງ;

**ມາດຕາ 12. ການຕົກລົງກວດສອບ**

ການຕົກລົງກວດສອບ ໃຫ້ອອກເປັນຂໍ້ຕົກລົງກວດສອບ ຊຶ່ງມີເນື້ອໃນຕົ້ນຕໍດັ່ງນີ້:

Œ ®úº-ºó¤©É¾-¡ö©Ï¾¨ À²ˆº©¿À-ó-¡¾-¡¸©¦º®;
Œ §ˆ¢º¤À¯í¾Ï¾¨«õ¡¡¸©¦º®;
Œ ¥÷©¯½¦ö¤, ì½©ñ®£¾©Ï¾¨, À-œºÃ- Áì½¢º®À¢©¢º¤¡¾-¡¸©¦º®;
Œ ¦½«¾-ê†¡¸©¦º®;
Œ ¡¿-ö©À¸ì¾¡¸©¦º®;
Œ £½-½¡¸©¦º®.

Ã-À¸ì¾©¿À-ó-¡¾-¡¸©¦º® «É¾À¹ñ-¸È¾ À-œºÃ-, ¢º®À¢©, ສະຖານທີ່, ກຳນົດເວລາກວດສອບ, ຄະນະກວດສອບ ມີຄວາມຈຳເປັນຕ້ອງປ່ຽນແປງນັ້ນ ປະທານອົງການກວດສອບສູນກາງ ຫຼື ຫົວໜ້າອົງການກວດສອບປະຈຳພາກ ຕ້ອງມີຂໍ້ຕົກລົງເພີ່ມເຕີມຢ່າງເປັນທາງການ.

**ມາດຕາ 13. ການແຈ້ງຂໍ້ຕົກລົງກວດສອບ**

ຂໍ້ຕົກລົງກວດສອບ ຕ້ອງແຈ້ງຢ່າງເປັນລາຍລັກອັກສອນ ໃຫ້ເປົ້າໝາຍຖືກກວດສອບຊາບລ່ວງໜ້າ ສິບຫ້າວັນ ກ່ອນຈະເລີ່ມຕົ້ນດຳເນີນການກວດສອບ ຍົກເວັ້ນກໍລະນີການກວດສອບແບບກະທັນຫັນ.

**ມາດຕາ 14. ການກະກຽມການກວດສອບ**

ພາຍຫຼັງທີ່ມີການຕົກລົງກວດສອບແລ້ວ ຄະນະກວດສອບແຫ່ງລັດ ຕ້ອງກະກຽມວຽກງານຂອງຕົນ ຊຶ່ງມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ສຳຫຼວດ, ເກັບກຳ ແລະ ລວບລວມຂໍ້ມູນກ່ຽວກັບສະພາບດ້ານການເງິນ, ລະບົບຄວບຄຸມພາຍໃນ ແລະ ຂໍ້ມູນອື່ນ ທີ່ພົວພັນເຖິງເປົ້າໝາຍຖືກກວດສອບ;
2. ຕີລາຄາລະບົບຄວບຄຸມພາຍໃນ ແລະ ຂໍ້ມູນທີ່ເກັບກຳໄດ້ຂອງເປົ້າໝາຍທີ່ຈະຕ້ອງກວດສອບ ເພື່ອກຳນົດຈຸດປະສົງ, ລະດັບຄາດໝາຍ, ເນື້ອໃນ, ຂອບເຂດ ແລະ ວິທີການກວດສອບ ທີ່ເໝາະສົມ;
3. ສ້າງແຜນການກວດສອບລະອຽດ ພາຍຫຼັງທີ່ໄດ້ດຳເນີນຕາມ ຂໍ້ 1 ແລະ ຂໍ້ 2 ຂ້າງເທິງນີ້ແລ້ວ.

**ມາດຕາ 15. ການດຳເນີນການກວດສອບ**

ການດຳເນີນການກວດສອບ ໃຫ້ປະຕິບັດດັ່ງນີ້:

1. ຄະນະກວດສອບ ຕ້ອງດຳເນີນການກວດສອບ ໃຫ້ຖືກຕ້ອງຕາມເນື້ອໃນຂໍ້ຕົກລົງກວດສອບ ແລະແຜນການກວດສອບລະອຽດ;
2. ການກວດສອບ ດຳເນີນດ້ວຍການກວດສອບເອກະສານ ແລະ ລົງກວດສອບຕົວຈິງກັບທີ່;
3. ການກວດສອບ ຕ້ອງດຳເນີນຕາມມາດຕະຖານການກວດສອບແຫ່ງລັດ.

**ມາດຕາ 16. ການສະຫຼຸບຜົນການກວດສອບ**

ເມື່ອສິ້ນສຸດການກວດສອບແລ້ວ ຜູ້ກວດສອບຕ້ອງສະຫຼຸບຜົນການກວດສອບ ຊຶ່ງຕ້ອງກຳນົດແຈ້ງ ຄຳເຫັນກ່ຽວກັບການຕີລາຄາ, ການຢັ້ງຢືນ ແລະ ຄຳແນະນຳກ່ຽວກັບເນື້ອໃນທີ່ໄດ້ຜ່ານການກວດສອບ. ຮ່າງບົດບັນທຶກຜົນການກວດສອບ ຕ້ອງສົ່ງໃຫ້ເປົ້າໝາຍຖືກກວດສອບ ມີຄຳເຫັນເປັນລາຍລັກອັກສອນ, ຖ້າຫາກບໍ່ມີຄຳຕອບເປັນລາຍລັກອັກສອນພາຍໃນກຳນົດ ສິບຫ້າວັນ ນັບແຕ່ວັນໄດ້ຮັບຮ່າງບົດບັນທຶກຜົນການກວດສອບເປັນຕົ້ນໄປ ກໍຖືວ່າເປັນການເຫັນດີນຳຮ່າງບົດບັນທຶກຜົນການກວດສອບນັ້ນ; ບົດສະຫຼຸບຜົນການກວດສອບ ຕ້ອງລົງລາຍເຊັນ ແລະ ຢັ້ງຢືນໂດຍປະທານອົງການກວດສອບສູນກາງ ຫຼື ຫົວໜ້າອົງການກວດສອບປະຈຳພາກ.

**ມາດຕາ 17. ບ່ອນສົ່ງບົດສະຫຼຸບຜົນການກວດສອບ**

**ການສົ່ງບົດສະຫຼຸບຜົນການກວດສອບ ໃຫ້ປະຕິບັດດັ່ງນີ້:**

1. ບົດສະຫຼຸບຜົນການກວດສອບກ່ຽວກັບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳສົກປີ ຕ້ອງສົ່ງໃຫ້ຄະນະປະຈຳສະພາແຫ່ງຊາດ ແລະ ນາຍົກລັດຖະມົນຕີ;
2. ບົດສະຫຼຸບຜົນການເຄື່ອນໄຫວກວດສອບປະຈຳປີ ຂອງອົງການກວດສອບແຫ່ງລັດ ຕ້ອງສົ່ງໃຫ້ຄະນະປະຈຳສະພາແຫ່ງຊາດ ແລະ ນາຍົກລັດຖະມົນຕີ;
3. ບົດສະຫຼຸບຜົນການກວດສອບ ຕາມຄຳສະເໜີຂອງການຈັດຕັ້ງທີ່ກ່ຽວຂ້ອງ ຕ້ອງສົ່ງໃຫ້ເປົ້າໝາຍຖືກກວດສອບ ແລະການຈັດຕັ້ງທີ່ສະເໜີໃຫ້ກວດສອບ;
4. ບົດສະຫຼຸບຜົນການກວດສອບແບບກະທັນຫັນ ຕ້ອງສົ່ງໃຫ້ການຈັດຕັ້ງທີ່ສະເໜີໃຫ້ກວດສອບ;

ບົດສະຫຼຸບຜົນການກວດສອບແຕ່ລະຄັ້ງ ຕ້ອງສົ່ງໃຫ້ເປົ້າໝາຍຖືກກວດສອບ ແລະ ອົງການຄຸ້ມຄອງເປົ້າໝາຍຖືກກວດສອບ.

**ມາດຕາ 18. ການເປີດເຜີຍຜົນການກວດສອບ**

ບົດສະຫຼຸບຜົນການກວດສອບ ຈະສາມາດເປີດເຜີຍໄດ້ ກໍຕໍ່ເມື່ອໄດ້ລາຍງານ ແລະ ໄດ້ຮັບອະນຸຍາດຈາກການຈັດຕັ້ງລັດທີ່ມີສິດກ່ຽວຂ້ອງແລ້ວເທົ່ານັ້ນ.

ປະທານອົງການກວດສອບສູນກາງ ຫຼື ຫົວໜ້າອົງການກວດສອບປະຈຳພາກ ເປັນຜູ້ເປີດເຜີຍຕາມແຕ່ລະກໍລະນີ ດັ່ງນີ້:

1. ຈັດກອງປະຊຸມຂ່າວ;

2. ລົງໜັງສືພິມ, ຂ່າວສານ, ໂທລະພາບ, ວິທະຍຸ ແລະພາຫະນະສື່ມວນຊົນອື່ນ;
3. ລົງໃນເວັບໄຊ ຂໍ້ມູນຂ່າວສານຂອງອົງການກວດສອບແຫ່ງລັດ.

**ມາດຕາ 19. ການແກ້ໄຂການລະເມີດ**

ທຸກການກະທຳ ທີ່ເປັນການລະເມີດລະບຽບກົດໝາຍ ທີ່ໄດ້ພົບເຫັນໃນການກວດສອບ ຕ້ອງໄດ້ຮັບການແກ້ໄຂຢ່າງເຂັ້ມງວດ ແລະ ທັນເວລາ ຖ້າເຫັນວ່າ:

1. ມີການລະເມີດລະບຽບກົດໝາຍທີ່ມີລັກສະນະເບົາບາງນັ້ນ ອົງການກວດສອບແຫ່ງລັດ ຈະສົ່ງບົດສະຫຼຸບຜົນການກວດສອບ ໃຫ້ອົງການຄຸ້ມຄອງເປົ້າໝາຍຖືກກວດສອບ ເພື່ອສຶກສາອົບຮົມ ຫຼື ລົງວິໄນ;
2. ມີການລະເມີດລະບຽບກົດໝາຍທີ່ເປັນການກໍ່ຄວາມເສຍຫາຍທາງແພ່ງ ຫຼື ເປັນການກະທຳຜິດທາງອາຍານັ້ນ ອົງການກວດສອບແຫ່ງລັດ ຈະສົ່ງບົດສະຫຼຸບຜົນການກວດສອບ ໃຫ້ພາກສ່ວນທີ່ມີສິດອຳນາດກ່ຽວຂ້ອງແກ້ໄຂ.

**ມາດຕາ 20. ການກວດຄືນການຈັດຕັ້ງປະຕິບັດຄຳແນະນຳແລະຄຳສະເໜີແກ້ໄຂຜົນການກວດສອບ**

ອົງການກວດສອບແຫ່ງລັດ ຕ້ອງດຳເນີນການກວດກາຄືນ ກ່ຽວກັບການຈັດຕັ້ງປະຕິບັດຄຳແນະນຳກວດສອບ ເພື່ອຕີລາຄາດ້ານດີ, ດ້ານອ່ອນ ແລະ ຂໍ້ຄົງຄ້າງ ໃນການຈັດຕັ້ງປະຕິບັດ ຄຳແນະນຳກວດສອບຜ່ານມານັ້ນ.

ສຳລັບເປົ້າໝາຍທີ່ໄດ້ຖືກກວດສອບຜ່ານມາແລ້ວ ຕ້ອງລາຍງານເປັນລາຍລັກອັກສອນກ່ຽວກັບຜົນຂອງການຈັດຕັ້ງປະຕິບັດຄຳແນະນຳກວດສອບ, ສະພາບຄວາມເປັນຈິງຂອງການຈັດຕັ້ງປະຕິບັດຄຳແນະນຳດັ່ງກ່າວ ລວມທັງຂໍ້ສະເໜີຂອງຕົນໃຫ້ອົງການກວດສອບແຫ່ງລັດ.

## ຂ. ປະເພດ, ຂອບເຂດ, ເປົ້າໝາຍ, ກຳນົດເວລາ ແລະ ສະຖານທີ່ ກວດສອບ

**ມາດຕາ 21. ປະເພດການກວດສອບ**

ການກວດສອບແຫ່ງລັດ ມີ ສາມປະເພດ ດັ່ງນີ້:

1. ການກວດສອບຕາມແຜນການ;
2. ການກວດສອບຕາມຄຳສະເໜີ ;
3. ການກວດສອບແບບກະທັນຫັນ.

ການກວດສອບຕາມແຜນການ ແມ່ນການກວດສອບທີ່ດຳເນີນໄປຕາມແຜນການທີ່ໄດ້ວາງໄວ້ ແລະມີກຳນົດເວລາອັນແນ່ນອນ ໂດຍມີການແຈ້ງໃຫ້ເປົ້າໝາຍຖືກກວດສອບຊາບລ່ວງໜ້າ.

ການກວດສອບຕາມຄຳສະເໜີ ແມ່ນການກວດສອບທີ່ດຳເນີນຕາມຄຳສະເໜີຂອງອົງການຄຸ້ມຄອງເປົ້າໝາຍຖືກກວດສອບ ຫຼື ເປົ້າໝາຍຖືກກວດສອບ.

ການກວດສອບແບບກະທັນຫັນ ແມ່ນການກວດສອບໃນກໍລະນີທີ່ຈຳເປັນ ແລະ ຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ເປົ້າໝາຍຖືກກວດສອບຊາບລ່ວງໜ້າ.

**ມາດຕາ 22. ຂອບເຂດການກວດສອບ**

ການກວດສອບແຫ່ງລັດ ມີສາມຂົງເຂດດັ່ງນີ້:

1. ການກວດສອບເອກະສານລາຍງານການເງິນ;
2. ການກວດສອບຄວາມສອດຄ່ອງທາງດ້ານລະບຽບກົດໝາຍ;
3. ການກວດສອບຜົນການຈັດຕັ້ງປະຕິບັດ.

**ມາດຕາ 23. ການກວດສອບເອກະສານລາຍງານການເງິນ**

ການກວດສອບເອກະສານລາຍງານການເງິນ ແມ່ນການກວດກາບັນດາເອກະສານ ກ່ຽວກັບການເງິນປະຈຳປີເຊັ່ນ: ໃບສະຫລຸບຊັບສິນບັດ, ໃບລາຍງານຜົນໄດ້ຮັບ, ໃບລາຍງານກະແສເງິນສົດລວມ, ໃບລາຍງານສ່ວນປ່ຽນແປງຂອງທຶນຕົນເອງ ແລະ ເອກະສານອື່ນ ທີ່ພົວພັນກັບການກວດສອບ ເພື່ອຕີລາຄາ ແລະ ຢັ້ງຢືນລະດັບຄວາມຖືກຕ້ອງຕາມຕົວຈິງ, ຕາມລະບຽບກົດໝາຍ, ຕາມມາກຕຍຄາຈສັຈຊີ ຂອງຜົນການເຄື່ອນໄຫວ ແລະ ຖານະການເງິນຂອງເປົ້າໝາຍຖືກກວດສອບ.

**ມາດຕາ 24. ການກວດສອບຄວາມສອດຄ່ອງທາງດ້ານລະບຽບກົດໝາຍ**

ການກວດສອບຄວາມສອດຄ່ອງທາງດ້ານລະບຽບກົດໝາຍ ມີເນື້ອໃນດັ່ງນີ້:

1. ການກວດກາສະພາບການປະຕິບັດກົດໝາຍຕ່າງໆເຊັ່ນ : ກົດໝາຍ ວ່າດ້ວຍ ການບັນຊີ, ວິສາຫະກິດ, ທະນາຄານທຸລະກິດ, ພາສີ, ສ່ວຍສາອາກອນ, ກົດຫມາຍ ວ່າດ້ວຍອາກອນມູນຄ່າເພີ່ມ ແລະ ລະບຽບກົດຫມາຍອື່ນທີ່ກ່ຽວຂ້ອງ;
2. ສະພາບການຈັດຕັ້ງປະຕິບັດນິຕິກຳຕ່າງໆ ແລະ ກົດລະບຽບພາຍໃນ ຂອງເປົ້າໝາຍຖືກກວດສອບ.

**ມາດຕາ 25. ການກວດສອບຜົນການຈັດຕັ້ງປະຕິບັດ**

ການກວດສອບຜົນການຈັດຕັ້ງປະຕິບັດ ມີເນື້ອໃນດັ່ງນີ້:

1. ສະພາບການຈັດຕັ້ງປະຕິບັດຄາດໝາຍຂອງແຜນການ ແລະ ບົດວິພາກເສດຖະກິດ- ເຕັກນິກ ຫຼື ການກວດກາວັດແທກໝາກຜົນຂອງການຈັດຕັ້ງປະຕິບັດວຽກງານ ໂດຍສົມທຽບໃສ່ຄາດຫມາຍທີ່ໄດ້ວາງໄວ້;
2. ການກວດກາລະດັບການຮັບປະກັນການຄຸ້ມຄອງ ແລະ ການນຳໃຊ້ ຊັບພະຍາກອນ ແລະ ທ່າແຮງຕ່າງໆໃຫ້ມີປະສິດທິຜົນ, ປະຢັດ, ຍືນຍົງ ແລະ ຮັກສາສິ່ງແວດລ້ອມ;
3. ປະສິດທິຜົນຂອງການຄວບຄຸມພາຍໃນຂອງເປົ້າໝາຍຖືກກວດສອບ;
4. ແຜນງານ, ໂຄງການ, ການເຄື່ອນໄຫວຕ່າງໆ ຂອງເປົ້າໝາຍຖືກກວດສອບ;
5. ຜົນກະທົບຂອງສະພາບແວດລ້ອມທາງນອກ ຕໍ່ບັນຫາເສດຖະກິດ ແລະ ປະສິດທິຜົນໃນການເຄື່ອນໄຫວຂອງເປົ້າໝາຍຖືກກວດສອບ.

**ມາດຕາ 26. ເປົ້າໝາຍຖືກກວດສອບ**

ເປົ້າໝາຍຖືກກວດສອບແຫ່ງລັດ ມີດັ່ງນີ້:

1. ອົງການຈັດຕັ້ງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະອົງການຈັດຕັ້ງ ອື່ນທີ່ຄຸ້ມຄອງ ແລະນຳໃຊ້ທຶນຮອນຂອງລັດ;

2. ອົງການຈັດຕັ້ງການເມືອງ-ສັງຄົມ ທີ່ນຳໃຊ້ງົບປະມານແຫ່ງລັດ;
3. ກົມກອງ ທີ່ຂຶ້ນກັບກຳລັງປະກອບອາວຸດ;
4. ໂຄງການລົງທຶນຂອງລັດ ທີ່ນຳໃຊ້ທຶນມາຈາກງົບປະມານພາຍໃນ, ທຶນກູ້ຢືມ, ທຶນສົມທົບ ຫຼື ທຶນຊ່ວຍເຫຼືອລ້າຈາກພາຍໃນ ຫຼື ຕ່າງປະເທດ;
5. ວິສາຫະກິດຂອງລັດ ແລະ ວິສາຫະກິດປະສົມ.

**ມາດຕາ 27. ການຕົກລົງຂົງເຂດການກວດສອບ**

ອີງໃສ່ຈຸດປະສົງຂອງການກວດສອບແຕ່ລະຄັ້ງ ຜູ້ຕົກລົງໃຫ້ກວດສອບ ເປັນຜູ້ກຳນົດຂົງເຂດການກວດສອບ ຊຶ່ງອາດຈະມີໜຶ່ງ ຫຼື ຫຼາຍຂົງເຂດຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 22 ຂອງກົດໝາຍສະບັບນີ້.

**ມາດຕາ 28. ກຳນົດເວລາກວດສອບ**

ອີງໃສ່ການຕົກລົງຂົງເຂດການກວດສອບແຕ່ລະຄັ້ງ ຜູ້ຕົກລົງໃຫ້ກວດສອບ ເປັນຜູ້ກຳນົດເວລາກວດສອບ, ໃນກໍລະນີທີ່ການກວດສອບ ຫາກບໍ່ສຳເລັດ ກໍສາມາດຕໍ່ເວລາໄດ້.

**ມາດຕາ 29. ສະຖານທີ່ກວດສອບ**

ການກວດສອບ ຕ້ອງດຳເນີນຢູ່ສຳນັກງານ ຂອງເປົ້າໝາຍຖືກກວດສອບ. ໃນກໍລະນີທີ່ຈຳເປັນຈະກວດສອບຢູ່ນອກສະຖານທີ່ສຳນັກງານຂອງເປົ້າໝາຍຖືກກວດສອບກໍໄດ້ ແຕ່ເປົ້າໝາຍຖືກກວດສອບຕ້ອງສົ່ງສຳນວນເອກະສານ ແລະ ຂໍ້ມູນຕ່າງໆທີ່ກ່ຽວຂ້ອງ ໄປໃຫ້ຄະນະກວດສອບ ຕາມຄວາມຕ້ອງການ.

## ໝວດທີ 2
## ການກວດສອບເອກະລາດ

**ມາດຕາ 30. ຂົງເຂດ ແລະ ເຈ”ພໃຈ ດານກວດສອບເອກະລາດ**

ຂົງເຂດ ແລະເນື້ອໃນ ການກວດສອບເອກະລາດ ໃຫ້ປະຕິບັດຕາມ ມາດຕາ 22, 23, 24 ແລະ 25 ຂອງກົດໝາຍສະບັບນີ້.

**ມາດຕາ 31. ຂັ້ນຕອນການກວດສອບເອກະລາດ**

ການກວດສອບເອກະລາດ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:
- ການຄັດເລືອກຜູ້ກວດສອບອິດສະລະ;
- ຂໍ້ຜູກພັນດ້ານການກວດສອບ;
- ການສ້າງແຜນງານກວດສອບ;
- ການດຳເນີນການກວດສອບ;
- ບົດລາຍງານການກວດສອບ.

**ມາດຕາ 32. ການຄັດເລືອກຜູ້ກວດສອບອິດສະລະ**

ການຄັດເລືອກຜູ້ກວດສອບອິດສະລະ ດຳເນີນດ້ວຍສອງວິທີ ຄື :

- ກອງປະຊຸມໃຫຍ່ປະຈຳປີ ຂອງຜູ້ຖືຮຸ້ນ;
- ຕາມການສະເໜີຂອງຜູ້ໃຫ້ກູ້ຢືມ, ຜູ້ໃຫ້ທຶນ, ນັກລົງທຶນ ຫຼື ຕາມທີ່ໄດ້ກຳນົດໄວ້ໃນສັນຍາ.

**ມາດຕາ 33. ຂໍ້ຜູກພັນດ້ານການກວດສອບເອກະລາດ**

ການກວດສອບເອກະລາດ ຈະດຳເນີນໄດ້ກໍຕໍ່ເມື່ອມີການສະເໜີ ຂອງຫົວໜ່ວຍຖືກກວດສອບ ບົນພື້ນຖານການເຊັນຂໍ້ຜູກພັນສັນຍາດ້ານການກວດສອບ ລະຫວ່າງ ຜູ້ກວດສອບ ແລະ ຜູ້ຖືກກວດສອບ.

ເນື້ອໃນຂອງຂໍ້ຜູກພັນດ້ານການກວດສອບ ກຳນົດໃຫ້ມີການປະກອບເອກະສານ ແລະ ມີການຢືນຢັນຮັບຮອງຂອງຜູ້ກວດສອບ ກ່ຽວກັບການແຕ່ງຕັ້ງ ແລະ ແບ່ງງານພາຍໃນໜ່ວຍງານກວດສອບ, ວັດຖຸປະສົງ, ຂອບເຂດການກວດສອບ, ກຳນົດຄວາມຮັບຜິດຊອບຂອງຜູ້ກວດສອບ ແລະ ຜູ້ຖືກກວດສອບ ແລະ ຮູບແບບບົດລາຍງານຕ່າງໆ.

**ມາດຕາ 34. ການສ້າງແຜນງານກວດສອບ**

ການສ້າງແຜນງານກວດສອບ ຕ້ອງດຳເນີນ ດັ່ງນີ້ :

1. ສຶກສາສະພາບການເບື້ອງຕົ້ນດ້ານການຄຸ້ມຄອງການເງິນ, ການບັນຊີ, ລະບົບຄວບຄຸມພາຍໃນ ແລະ ທ່າອ່ຽງດ້ານການເຕີບໃຫຍ່ຂະຫຍາຍຕົວ ຂອງຂະແໜງການທຸລະກິດທີ່ກ່ຽວຂ້ອງ;
2. ປະເມີນຜົນລະບົບການຄວບຄຸມພາຍໃນ ແລະ ຄວາມສ່ຽງດ້ານການກວດສອບ;
3. ວາງແຜນການກວດສອບ, ກຳນົດເປົ້າໝາຍ, ກະກຽມຄຳຖາມເຈາະຈີ້ມ, ສອບຖາມພາກສ່ວນທີ່ກ່ຽວຂ້ອງ ເພື່ອຊອກຫາຫຼັກຖານທີ່ແທດເໝາະ ແລະ ພຽງພໍ ແລະ ກຳນົດເວລາກວດສອບ.

**ມາດຕາ 35. ການດຳເນີນການກວດສອບ**

ການດຳເນີນການກວດສອບ ຕ້ອງປະຕິບັດຕາມເນື້ອໃນຂອງຂໍ້ຜູກພັນ ດ້ານການກວດສອບ ແລະ ຕາມແຜນງານທີ່ໄດ້ວາງໄວ້, ກຳນົດ ແລະ ແບ່ງຄວາມຮັບຜິດຊອບຢ່າງຈະແຈ້ງ ໃນໜ່ວຍງານກວດສອບ ໂດຍມີການຄວບຄຸມຢ່າງເຂັ້ມງວດຈາກຫົວໜ້າໜ່ວຍງານ.

ການດຳເນີນການກວດສອບ ຕ້ອງປະຕິບັດຕາມມາດຕະຖານການກວດສອບເອກະລາດ ເພື່ອກວດສອບແຕ່ລະຮອບວຽນການທຸລະກິດ ແລະ ປະເມີນຜົນ ກ່ຽວກັບຫຼັກຖານທີ່ໄດ້ຮັບ.

**ມາດຕາ 36. ບົດລາຍງານການກວດສອບ**

ບົດລາຍງານການກວດສອບ ມີດັ່ງນີ້ :

1. ບົດລາຍງານການກວດສອບເອກະສານລາຍງານການເງິນ ຊຶ່ງແມ່ນບົດຢັ້ງຢືນຄວາມຖືກຕ້ອງຕາມຕົວຈິງ, ຄວາມຖືກຕ້ອງຕາມລະບຽບກົດໝາຍ ແລະ ລະດັບຄວາມເຊື່ອຖືໄດ້ ຂອງເອກະສານລາຍງານການເງິນ;
2. ບົດລາຍງານການກວດສອບຄວາມຖືກຕ້ອງຕາມລະບຽບກົດຫມາຍ ແລະ ຜົນການປະຕິບັດງານ ຊຶ່ງແມ່ນບົດປະເມີນການປະຕິບັດກົດໝາຍ, ປະສິດທິພາບ ແລະ ປະສິດທິຜົນໃນການປະ ຕິບັດງານ ຂອງຫົວຫນ່ວຍທີ່ຖືກກວດສອບ;

ຮ່າງບົດລາຍງານການກວດສອບ ຕ້ອງມີຈົດໝາຍແນະນໍາວິທີການ ແລະມາດຕະການແກ້ໄຂ ໃຫ້ແກ່ຫົວໜ່ວຍຖືກກວດສອບຕິດຄັດໄປພ້ອມ.

ຮ່າງບົດລາຍງານການກວດສອບ ຕ້ອງສົ່ງໃຫ້ຫົວໜ່ວຍທີ່ຖືກກວດສອບມີຄວາມເຫັນຕໍ່ແຕ່ລະຂໍ້ແນະນໍາກ່ອນຈະລົງລາຍເຊັນ ແລະ ນໍາສົ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງ ດັ່ງທີ່ໄດ້ກໍານົດໄວ້ໃນ ມາດຕາ 17 ຂອງກົດໝາຍສະບັບນີ້.

**ມາດຕາ 37. ການກວດສອບໃນຂົງເຂດການເງິນແຫ່ງລັດ**

ການກວດສອບໃນຂົງເຂດການເງິນແຫ່ງລັດ ໃຫ້ປະຕິບັດດັ່ງນີ້:

1. ເຊັນຂໍ້ຜູກພັນສັນຍາ ກັບອົງການກວດສອບແຫ່ງລັດ ແລະ ໄດ້ຮັບຄ່າກວດສອບ ຕາມການຕົກລົງຂອງສອງຝ່າຍ;
2. ຕ້ອງດໍາເນີນການກວດສອບຕາມມາດຕະຖານການກວດສອບແຫ່ງລັດ;
3. ຕ້ອງສົ່ງບົດລາຍງານຜົນການກວດສອບ ໃຫ້ອົງການກວດສອບແຫ່ງລັດ; ຖ້າມີຄວາມຈໍາເປັນອົງການກວດສອບແຫ່ງລັດ ມີສິດກວດກາຄືນຜົນການກວດສອບນັ້ນ.

## ພາກທີ III
## ອົງການກວດສອບ

### ໝວດທີ 1
### ອົງການກວດສອບແຫ່ງລັດ

#### ກ. ລະບົບການຈັດຕັ້ງ ແລະບຸກຄະລາກອນ

**ມາດຕາ 38. ທີ່ຕັ້ງ ແລະພາລະບົດບາດຂອງອົງການກວດສອບແຫ່ງລັດ**

ອົງການກວດສອບແຫ່ງລັດ ແມ່ນອົງການກວດກາທາງດ້ານເສດຖະກິດ, ການເງິນແຫ່ງລັດ, ຖືກສ້າງຕັ້ງ ຫຼື ຍຸບເລີກ ໂດຍສະພາແຫ່ງຊາດ, ມີພາລະບົດບາດກວດສອບການຈັດຕັ້ງຕ່າງໆທີ່ຄຸ້ມຄອງ ແລະນໍາໃຊ້ທຶນຮອນຂອງລັດ ກ່ຽວກັບຂົງເຂດການກວດສອບ ທີ່ໄດ້ກໍານົດໄວ້ໃນມາດຕາ 22 ຂອງກົດໝາຍສະບັບນີ້.

**ມາດຕາ 39. ລະບົບການຈັດຕັ້ງຂອງອົງການກວດສອບແຫ່ງລັດ**

ລະບົບການຈັດຕັ້ງ ຂອງອົງການກວດສອບແຫ່ງລັດ ປະກອບດ້ວຍ:

- ອົງການກວດສອບສູນກາງ;
- ອົງການກວດສອບປະຈໍາພາກ.

**ມາດຕາ 40. ອົງການກວດສອບສູນກາງ**

ອົງການກວດສອບສູນກາງ ແມ່ນອົງການກວດສອບຂັ້ນສູງສຸດ ໃນລະບົບການຈັດຕັ້ງຂອງອົງການກວດສອບແຫ່ງລັດ.

ອົງການກວດສອບສູນກາງ ມີສິດ ແລະໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າຍຸດທະສາດ, ນະໂຍບາຍ, ລະບຽບກົດໝາຍ, ທິດທາງແຜນການ, ມາດຕະຖານ ແລະ ມາດຕະການ ກ່ຽວກັບວຽກງານກວດສອບ ແລ້ວສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ;
2. ສ້າງແຜນການກວດສອບປະຈຳປີ ແລະຈັດຕັ້ງປະຕິບັດ;
3. ຈັດຕັ້ງໂຄສະນາເຜີຍແຜ່ ນະໂຍບາຍ, ລະບຽບກົດໝາຍ ແລະ ມາດຕະຖານ ກ່ຽວກັບວຽກງານກວດສອບ;
4. ຄຸ້ມຄອງ, ຊີ້ນຳ, ກວດກາການຈັດຕັ້ງປະຕິບັດນະໂຍບາຍ, ລະບຽບກົດໝາຍ, ມາດຕະຖານ ກ່ຽວກັບວຽກງານກວດສອບຂອງຂັ້ນລຸ່ມ;
5. ເຊັນສັນຍາກັບຫົວໜ່ວຍກວດສອບອິດສະລະ;
6. ກໍ່ສ້າງ ແລະ ຍົກລະດັບບຸກຄະລາກອນ ເພື່ອຮັບໃຊ້ວຽກງານກວດສອບ;
7. ພິຈາລະນາ, ແກ້ໄຂຄຳສະເໜີກ່ຽວກັບການກວດສອບ ເປັນຕົ້ນບົດສະຫຼຸບຜົນການກວດສອບ;
8. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບວຽກງານກວດສອບ;
9. ພົວພັນຮ່ວມມືກັບຕ່າງປະເທດ ແລະອົງການຈັດຕັ້ງສາກົນ ໃນຂົງເຂດວຽກງານກວດສອບ;
10. ສະຫຼຸບລາຍງານການເຄື່ອນໄຫວວຽກງານກວດສອບປະຈຳທຶກເດືອນ ແລະ ປະຈຳປີ ໃຫ້ຄະນະປະຈຳສະພາແຫ່ງຊາດ ແລະນາຍົກລັດຖະມົນຕີ;
11. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

### ມາດຕາ 41. ໂຄງປະກອບການຈັດຕັ້ງ ແລະບຸກຄະລາກອນຂອງອົງການກວດສອບສູນກາງ

ໂຄງປະກອບບຸກຄະລາກອນຂອງອົງການກວດສອບສູນກາງ ມີດັ່ງນີ້:

- ປະທານ;
- ຮອງປະທານຈຳນວນໜຶ່ງ;
- ນັກກວດສອບ ແລະພະນັກງານວິຊາການ.

ສຳລັບໂຄງປະກອບການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການກວດສອບສູນກາງ ກຳນົດໄວ້ໃນລະບຽບການສະເພາະ.

### ມາດຕາ 42. ປະທານອົງການກວດສອບສູນກາງ

ປະທານອົງການກວດສອບສູນກາງ ຖືກເລືອກຕັ້ງ ຫຼື ປົດຕຳແໜ່ງ ໂດຍກອງປະຊຸມສະພາແຫ່ງຊາດ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ, ມີອາຍຸການຫ້າປີ. ການເລືອກຕັ້ງດັ່ງກ່າວຕ້ອງດຳເນີນຢ່າງໄວໜຶ່ງປີຫຼັງຈາກກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ.

ປະທານອົງການກວດສອບສູນກາງ ມີສິດ ແລະໜ້າທີ່ດັ່ງນີ້:

1. ຮັບຜິດຊອບໂດຍກົງ ຕໍ່ສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງອົງການກວດສອບແຫ່ງລັດ;
2. ຊີ້ນຳ ແລະ ກວດກາ ການຈັດຕັ້ງປະຕິບັດວຽກງານກວດສອບແຫ່ງລັດທົ່ວປະເທດ;
3. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານກວດສອບແຫ່ງລັດ;

4. ສະເໜີຮ່າງນິຕິກຳ ກ່ຽວກັບວຽກງານກວດສອບ ຕໍ່ຄະນະປະຈຳສະພາແຫ່ງຊາດ;
5. ຮັບຜິດຊອບຕໍ່ໜ້າກົດໝາຍ ກ່ຽວກັບເນື້ອໃນບົດສະຫຼຸບຜົນການກວດສອບ ຂອງອົງການກວດສອບແຫ່ງລັດ;
6. ເຂົ້າຮ່ວມກອງປະຊຸມສະໄໝສາມັນ ຂອງສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ ແລະ ກອງປະຊຸມລັດຖະບານ ກ່ຽວກັບບັນຫາທີ່ພົວພັນເຖິງວຽກງານກວດສອບ;
7. ລາຍງານຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດ ແຜນງົບປະມານແຫ່ງລັດ ແລະ ຜົນການເຄື່ອນໄຫວກວດສອບປະຈຳປີ ຂອງອົງການກວດສອບແຫ່ງລັດ ຕໍ່ສະພາແຫ່ງຊາດ ແລະນາຍົກລັດຖະມົນຕີ;
8. ສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງ ສຶກສາອົບຮົມ, ລົງວິໄນ, ດຳເນີນຄະດີແພ່ງ ຫຼື ອາຍາ ຕໍ່ເປົ້າໝາຍຖືກກວດສອບ;
9. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ພະນັກງານຂອງອົງການກວດສອບສູນກາງ ແຕ່ ຂັ້ນຫົວໜ້າກົມລົງໄປ ລວມທັງພະນັກງານຂອງອົງການກວດສອບປະຈຳພາກ ແຕ່ຂັ້ນຮອງຫົວໜ້າອົງການກວດສອບປະຈຳພາກລົງໄປ;
10. ປະຕິບັດສິດ ແລະໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

### ມາດຕາ 43. ຮອງປະທານອົງການກວດສອບສູນກາງ

ຮອງປະທານອົງການກວດສອບສູນກາງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານປະເທດ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ.

ຮອງປະທານອົງການກວດສອບສູນກາງ ມີສິດ ແລະໜ້າທີ່ດັ່ງນີ້:

1. ຊ່ວຍວຽກປະທານອົງການກວດສອບສູນກາງ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງປະທານອົງການກວດສອບສູນກາງ;
2. ໃນກໍລະນີທີ່ປະທານ ບໍ່ຢູ່ ຫຼື ບໍ່ສາມາດປະຕິບັດໜ້າທີ່ໄດ້ນັ້ນ ແມ່ນຮອງປະທານຜູ້ທີ່ໄດ້ຮັບມອບໝາຍ ຈາກປະທານອົງການກວດສອບສູນກາງເປັນຜູ້ວ່າການແທນ.

### ມາດຕາ 44. ອົງການກວດສອບປະຈຳພາກ

ອົງການກວດສອບປະຈຳພາກ ເປັນອົງການກວດສອບຂັ້ນໜຶ່ງ ທີ່ຂຶ້ນກັບອົງການກວດສອບສູນກາງໂດຍກົງ, ດຳເນີນການກວດສອບບັນດາການຈັດຕັ້ງ ທີ່ຕັ້ງຢູ່ໃນພື້ນທີ່ຂອງພາກ ແລະ ກວດສອບເປົ້າໝາຍອື່ນໆ ຕາມການມອບໝາຍຂອງປະທານອົງການກວດສອບສູນກາງ.

ອົງການກວດສອບປະຈຳພາກ ມີສິດ ແລະໜ້າທີ່ດັ່ງນີ້:

1. ຄົ້ນຄວ້າຫັນເອົານະໂຍບາຍ, ມະຕິຕົກລົງ, ແຜນການຂອງອົງການກວດສອບສູນກາງ ມາເປັນແຜນການ, ແຜນງານ, ໂຄງການລະອຽດຂອງຕົນ ແລ້ວຈັດຕັ້ງປະຕິບັດ;
2. ໂຄສະນາເຜີຍແຜ່ລະບຽບກົດໝາຍ ກ່ຽວກັບການກວດສອບ ລວມທັງຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະແຈ້ງການ ຂອງປະທານອົງການກວດສອບສູນກາງ;
3. ດຳເນີນການກວດສອບ ຕາມແຜນການຂອງຕົນ ແລະ ຕາມການມອບໝາຍຂອງປະທານອົງການກວດສອບສູນກາງ;

4. ແຈ້ງຜົນການກວດສອບ ໃຫ້ເປົ້າໝາຍຖືກກວດສອບຊາບ;
5. ເຊັນສັນຍາກັບຫົວໜ່ວຍກວດສອບອິດສະລະ;
6. ພິຈາລະນາ, ແກ້ໄຂຄຳສະເໜີທີ່ພົວພັນກັບການກວດສອບ ເປັນຕົ້ນກ່ຽວກັບບົດສະຫຼຸບຜົນການກວດສອບ;
7. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງໃນການປະຕິບັດວຽກງານກວດສອບ;
8. ສະຫຼຸບລາຍງານການເຄື່ອນໄຫວວຽກງານກວດສອບປະຈຳງວດ ແລະ ປະຈຳປີ ໃຫ້ປະທານອົງການກວດສອບສູນກາງ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 45. ໂຄງປະກອບການຈັດຕັ້ງ ແລະບຸກຄະລາກອນຂອງອົງການກວດສອບປະຈຳພາກ**

ໂຄງປະກອບບຸກຄະລາກອນຂອງອົງການກວດສອບປະຈຳພາກ ມີດັ່ງນີ້:

- ຫົວໜ້າ;
- ຮອງຫົວໜ້າຈຳນວນໜຶ່ງ;
- ນັກກວດສອບ ແລະ ພະນັກງານວິຊາການ.

ສຳລັບໂຄງປະກອບການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການກວດສອບປະຈຳພາກ ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 46. ຫົວໜ້າອົງການກວດສອບປະຈຳພາກ**

ຫົວໜ້າອົງການກວດສອບປະຈຳພາກ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍຄະນະປະຈຳສະພາແຫ່ງຊາດ ຕາມການສະເໜີຂອງປະທານອົງການກວດສອບສູນກາງ.

ຫົວໜ້າອົງການກວດສອບປະຈຳພາກ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ຮັບຜິດຊອບໂດຍກົງຕໍ່ປະທານອົງການກວດສອບສູນກາງ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານກວດສອບຂອງຕົນ;
2. ຊີ້ນຳ ແລະ ກວດກາ ການດຳເນີນການກວດສອບ ໃຫ້ສອດຄ່ອງກັບມາດຕະຖານການກວດສອບ;
3. ສະເໜີປັບປຸງກົງຈັກການຈັດຕັ້ງ, ຈຳນວນພົນ ແລະ ການສັບຊ້ອນພະນັກງານ ຢູ່ໃນອົງການກວດສອບປະຈຳພາກຂອງຕົນ ຕໍ່ປະທານອົງການກວດສອບສູນກາງ;
4. ປະສານສົມທົບ ກັບອົງການຈັດຕັ້ງຕ່າງໆທີ່ກ່ຽວຂ້ອງ ຢູ່ໃນພື້ນທີ່ພາກຂອງຕົນ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ;
5. ລາຍງານຜົນຂອງການເຄື່ອນໄຫວວຽກງານທັງໝົດ ຂອງອົງການກວດສອບປະຈຳພາກ ໃຫ້ປະທານອົງການກວດສອບສູນກາງຢ່າງປົກກະຕິ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມລະບຽບກົດໝາຍ ແລະ ຕາມການມອບໝາຍຂອງປະທານອົງການກວດສອບສູນກາງ.

**ມາດຕາ 47. ຮອງຫົວໜ້າອົງການກວດສອບປະຈຳພາກ**

ຮອງຫົວໜ້າອົງການກວດສອບປະຈຳພາກ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານອົງການກວດສອບສູນກາງ ຕາມການສະເໜີຂອງຫົວໜ້າອົງການກວດສອບປະຈຳພາກ.

ຮອງຫົວໜ້າອົງການກວດສອບປະຈຳພາກ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ຊ່ວຍວຽກຫົວໜ້າອົງການກວດສອບປະຈຳພາກ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງຫົວໜ້າອົງການກວດສອບປະຈຳພາກ;
2. ໃນກໍລະນີທີ່ຫົວໜ້າອົງການກວດສອບປະຈຳພາກ ບໍ່ຢູ່ ຫຼື ບໍ່ສາມາດປະຕິບັດໜ້າທີ່ໄດ້ນັ້ນ ແມ່ນຮອງຫົວໜ້າອົງການກວດສອບປະຈຳພາກ ຜູ້ທີ່ໄດ້ຮັບມອບໝາຍ ຈາກຫົວໜ້າອົງການກວດສອບປະຈຳພາກ ເປັນຜູ້ວ່າການແທນ.

## ຂ. ນັກກວດສອບ ແລະຄະນະກວດສອບ ແຫ່ງລັດ

### ມາດຕາ 48. ນັກກວດສອບແຫ່ງລັດ

ນັກກວດສອບແຫ່ງລັດ ແມ່ນພະນັກງານທີ່ສັງກັດຢູ່ອົງການກວດສອບແຫ່ງລັດ ຊຶ່ງມີໜ້າທີ່ປະຕິບັດວຽກງານກວດສອບ.

ນັກກວດສອບແຫ່ງລັດ ຕ້ອງມີມາດຕະຖານດັ່ງນີ້:

1. ມີທັດສະນະຫຼັກໝັ້ນ, ມີຄຸນສົມບັດສິນທຳປະຕິວັດ;
2. ກຳແໜ້ນແນວທາງນະໂຍບາຍ, ລະບຽບກົດໝາຍ;
3. ມີຄວາມຮັບຜິດຊອບສູງ, ຄວາມປອດໃສ ແລະ ຄວາມຍຸຕິທຳ;
4. ມີຄວາມຮູ້, ຄວາມສາມາດ, ມີວິຊາສະເພາະໃດໜຶ່ງທີ່ກ່ຽວຂ້ອງກັບວຽກງານກວດສອບ ໂດຍມີປະກາສະນິຍະບັດແຕ່ຊັ້ນສູງຂຶ້ນໄປ;
5. ໄດ້ຜ່ານການຮຳຮຽນ ຫຼື ການຝຶກອົບຮົມວຽກງານກວດສອບ ແລະ ມີບົດຮຽນກ່ຽວກັບວຽກງານກວດສອບແຕ່ສາມປີຂຶ້ນໄປ;
6. ຮັກສາຄວາມລັບດ້ານວິຊາຊີບກວດສອບ;
7. ບໍ່ເຄີຍຖືກລົງວິໄນສະຖານໜັກ, ຕ້ອງໂທດທາງແພ່ງ ຫຼື ທາງອາຍາ ໂດຍເຈດຕະນາມາກ່ອນ;
8. ມີສຸຂະພາບສົມບູນ.

### ມາດຕາ 49. ຄະນະກວດສອບແຫ່ງລັດ

ຄະນະກວດສອບແຫ່ງລັດ ຖືກແຕ່ງຕັ້ງໂດຍປະທານອົງການກວດສອບສູນກາງ ຫຼື ຫົວໜ້າອົງການກວດສອບປະຈຳພາກ, ປະກອບດ້ວຍຫົວໜ້າ, ຮອງຫົວໜ້າ ແລະ ສະມາຊິກແຕ່ສາມຄົນ ຂຶ້ນໄປ.

ຄະນະກວດສອບແຫ່ງລັດ ມີໜ້າທີ່ດຳເນີນການກວດສອບຕາມຂັ້ນຕອນ ແລະ ມາດຕະຖານການກວດສອບ ທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

### ມາດຕາ 50. ຜູ້ຮ່ວມງານກວດສອບອິດສະລະ

ຜູ້ຮ່ວມງານກວດສອບອິດສະລະ ແມ່ນວິສາຫະກິດກວດສອບ ຫຼື ນັກກວດສອບ ອິດສະລະ ທີ່ໄດ້ເຊັນສັນຍາກວດສອບກັບອົງການກວດສອບສູນກາງ ຫຼື ອົງການກວດສອບປະຈຳພາກ ເພື່ອດຳເນີນການກວດສອບເອກະລາດ.

ຜູ້ຮ່ວມງານກວດສອບອິດສະລະ ມີສິດ ແລະໜ້າທີ່ຕົ້ນຕໍ ດັ່ງນີ້:

- ປະຕິບັດຕາມຂໍ້ຜູກພັນໃນສັນຍາກວດສອບ;
- ປະຕິບັດຕາມກົດໝາຍວ່າດ້ວຍການກວດສອບ ແລະ ກົດໝາຍອື່ນ ທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ;
- ຮັບຜິດຊອບ ຕໍ່ອົງການກວດສອບສູນກາງ ຫຼື ອົງການກວດສອບປະຈຳພາກ ກ່ຽວກັບຜົນການກວດສອບທີ່ຕົນໄດ້ປະຕິບັດ.

ສຳລັບລະບຽບການກ່ຽວກັບຜູ້ຮ່ວມງານກວດສອບອິດສະລະນັ້ນ ແມ່ນປະທານອົງການກວດສອບສູນກາງເປັນຜູ້ກຳນົດ.

### ຄ. ສະພາທີ່ປຶກສາການກວດສອບແຫ່ງລັດ

**ມາດຕາ 51. ສະພາທີ່ປຶກສາການກວດສອບແຫ່ງລັດ**

ສະພາທີ່ປຶກສາການກວດສອບແຫ່ງລັດ ແມ່ນການຈັດຕັ້ງໜຶ່ງ ທີ່ຢູ່ໃຕ້ການຄຸ້ມຄອງຂອງອົງການກວດສອບສູນກາງ, ມີພາລະບົດບາດຄົ້ນຄວ້າລະບຽບການຕ່າງໆກ່ຽວກັບການກວດສອບ ແລະ ໃຫ້ຄຳປຶກສາດ້ານວິຊາການກວດສອບ ແກ່ອົງການກວດສອບແຫ່ງລັດ.

**ມາດຕາ 52. ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ**

ໂຄງປະກອບບຸກຄະລາກອນຂອງສະພາທີ່ປຶກສາການກວດສອບແຫ່ງລັດ ມີດັ່ງນີ້ :

- ປະທານ ຊຶ່ງແມ່ນຮອງປະທານອົງການກວດສອບສູນກາງ;
- ຮອງປະທານ ຊຶ່ງແມ່ນຫົວໜ້າກົມໃດໜຶ່ງທີ່ກ່ຽວຂ້ອງຂອງອົງການກວດສອບສູນກາງ;
- ກຳມະການຈຳນວນໜຶ່ງ.

ສຳລັບໂຄງປະກອບການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາທີ່ປຶກສາການກວດສອບແຫ່ງລັດ ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 53. ສິດ ແລະ ໜ້າທີ່ ຂອງສະພາທີ່ປຶກສາການກວດສອບແຫ່ງລັດ**

ສະພາທີ່ປຶກສາການກວດສອບແຫ່ງລັດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າມາດຕະຖານ ແລະລະບຽບການຕ່າງໆກ່ຽວກັບການກວດສອບ;
2. ໃຫ້ຄຳປຶກສາດ້ານວິຊາການກວດສອບ ແກ່ອົງການກວດສອບແຫ່ງລັດ ເປັນຕົ້ນກ່ຽວກັບການກວດກາການເຄື່ອນໄຫວວຽກງານກວດສອບແຫ່ງລັດ, ບົດສະຫຼຸບ ແລະ ຄຳສະເໜີກ່ຽວກັບການກວດສອບ;
3. ປະກອບຄຳເຫັນໃສ່ຮ່າງນິຕິກຳກ່ຽວກັບການກວດສອບແຫ່ງລັດ;
4. ເຂົ້າຮ່ວມການເຄື່ອນໄຫວວຽກງານກວດສອບ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍ;
5. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມລະບຽບກົດໝາຍ.

## ໝວດທີ 2
## ການຈັດຕັ້ງກວດສອບອິດສະລະ

**ມາດຕາ 54. ລະບົບການຈັດຕັ້ງກວດສອບອິດສະລະ**

ລະບົບການຈັດຕັ້ງກວດສອບອິດສະລະ ປະກອບດ້ວຍ:

- ສະມາຄົມວິຊາຊີບນັກບັນຊີ ແລະ ນັກກວດສອບອິດສະລະ;
- ຫົວໜ່ວຍກວດສອບອິດສະລະ.

**ມາດຕາ 55. ສະມາຄົມວິຊາຊີບນັກບັນຊີ ແລະ ນັກກວດສອບອິດສະລະ**

ສະມາຄົມວິຊາຊີບນັກບັນຊີ ແລະ ນັກກວດສອບອິດສະລະ ເປັນອົງການຈັດຕັ້ງສັງຄົມໜຶ່ງ ທີ່ມີຖານະນິຕິບຸກຄົນ ຢູ່ພາຍໃຕ້ການຄຸ້ມຄອງຂອງກະຊວງການເງິນ, ມີພາລະບົດບາດເຕົ້າໂຮມບັນດານັກກວດສອບອິດສະລະ, ຄຸ້ມຄອງ, ຕິດຕາມ, ກວດກາ ກ່ຽວກັບຄວາມຮູ້, ຄວາມສາມາດ, ການດຳເນີນວິຊາຊີບການກວດສອບ ແລະ ຈັນຍາບັນ ຂອງນັກກວດສອບອິດສະລະ.

**ມາດຕາ 56. ສິດ ແລະ ໜ້າທີ່ ຂອງສະມາຄົມວິຊາຊີບນັກບັນຊີ ແລະ ນັກກວດສອບອິດສະລະ**

ສະມາຄົມວິຊາຊີບນັກບັນຊີ ແລະ ນັກກວດສອບອິດສະລະ ມີສິດ ແລະ ໜ້າທີ່ ດັ່ງນີ້ :

1. ສ້າງແຜນດຳເນີນງານໄລຍະກາງ ແລະ ໄລຍະຍາວ;
2. ກຳນົດລະບຽບການເພື່ອຄຸ້ມຄອງ ນັກກວດສອບອິດສະລະ;
3. ຈັດຕັ້ງຝຶກອົບຮົມທາງດ້ານວິຊາຊີບ, ຍົກລະດັບຄວາມຮູ້ຄວາມສາມາດ ຂອງຜູ້ປະກອບວິຊາຊີບນັກກວດສອບອິດສະລະ;
4. ປົກປ້ອງຄວາມເປັນເອກະລາດໃນການເຄື່ອນໄຫວວຽກງານກວດສອບເອກະລາດ ແລະ ກຽດສັກສີຂອງນັກກວດສອບອິດສະລະ;
5. ວາງມາດຕະການທາງດ້ານວິໄນ ຕໍ່ຜູ້ລະເມີດກົດຈັນຍາບັນທາງດ້ານວິຊາຊີບ, ມາດຕະຖານການກວດສອບເອກະລາດ ແລະ ລະບຽບການພາຍໃນຂອງສະມາຄົມ;
6. ລາຍງານການເຄື່ອນໄຫວ ຂອງສະມາຄົມວິຊາຊີບນັກບັນຊີ ແລະ ນັກກວດສອບອິດສະລະ ໃຫ້ກະຊວງການເງິນ;
7. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມລະບຽບກົດໝາຍ.

**ມາດຕາ 57. ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນຂອງສະມາຄົມວິຊາຊີບນັກບັນຊີ ແລະນັກກວດສອບອິດສະລະ**

ໂຄງປະກອບການຈັດຕັ້ງ ຂອງສະມາຄົມວິຊາຊີບນັກບັນຊີ ແລະ ນັກກວດສອບອິດສະລະ ມີດັ່ງນີ້ :

- ກອງປະຊຸມໃຫຍ່;
- ຫ້ອງການປະຈຳການ;
- ຄະນະກຳມະການຕ່າງໆ.

ໂຄງປະກອບບຸກຄະລາກອນ ຂອງສະມາຄົມວິຊາຊີບນັກບັນຊີ ແລະ ນັກກວດສອບອິດສະລະ ມີດັ່ງນີ້ :

- ປະທານ;
- ຮອງປະທານ ຈຳນວນໜຶ່ງ;
- ສະມາຊິກຂອງຫ້ອງການປະຈຳການ;
- ຫົວໜ້າ ແລະ ຮອງຫົວໜ້າ ຄະນະກຳມະການຕ່າງໆ;
- ສະມາຊິກຂອງສະມາຄົມ;
- ພະນັກງານວິຊາການຈຳນວນໜຶ່ງ.

ສຳລັບລະບຽບການເຄື່ອນໄຫວ ແລະ ງົບປະມານ ຂອງສະມາຄົມວິຊາຊີບນັກບັນຊີ ແລະ ນັກກວດສອບອິດສະລະ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 58. ຫົວໜ່ວຍກວດສອບອິດສະລະ**

¹ö¸ÎÈ¸¨¡¸©¦º®ºò©¦½ì½ ¯½¡º®©É¸¨ ¸ò¦¾¹½¡ò©¡¸©¦º® Áì½ -ñ¡¡¸©¦º®ºò© ສະລະ ຊຶ່ງໄດ້ຈົດທະບຽນດຳເນີນການກວດສອບເອກະລາດ ແລະ ຂຶ້ນທະບຽນວິສາຫະກິດຢ່າງຖືກຕ້ອງຕາມກົດໝາຍ.

**ມາດຕາ 59. ຜູ້ກວດສອບອິດສະລະ**

ຜູ້ກວດສອບອິດສະລະ ແມ່ນທີ່ປຶກສາບັນຊີ ຫຼື ນັກຊ່ຽວຊານບັນຊີ ທີ່ປະກອບອາຊີບ ອິດສະລະດ້ານການກວດສອບ ຊຶ່ງໄດ້ຈົດທະບຽນເປັນສະມາຊິກຂອງສະມາຄົມວິຊາຊີບນັກບັນຊີ ແລະ ນັກກວດສອບອິດສະລະ ແລະ ໄດ້ຂຶ້ນທະບຽນວິສາຫະກິດຢ່າງຖືກຕ້ອງຕາມກົດໝາຍ.

**ມາດຕາ 60. ສິດ ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງຜູ້ກວດສອບອິດສະລະ**

ຜູ້ກວດສອບອິດສະລະ ມີສິດ ໜ້າທີ່ ແລະ ຄວາມຮັບຜິດຊອບ ດັ່ງນີ້ :

1. ເປັນຜູ້ກວດສອບ ໃນຫົວໜ່ວຍທີ່ຕົນເອງບໍ່ໄດ້ເປັນທີ່ປຶກສາບັນຊີ;
2. ດຳເນີນການກວດສອບ ຫົວໜ່ວຍຕາມສັນຍາ;
3. ດຳເນີນການກວດສອບ ຕາມມາດຕະຖານການກວດສອບເອກະລາດ ຫຼື ມາດຕະຖານການກວດສອບແຫ່ງລັດ ໃນກໍລະນີທີ່ ໄດ້ເຊັນຂໍ້ຜູກພັນສັນຍາກວດສອບ ກັບອົງການກວດສອບແຫ່ງລັດ;
4. ບັນທຶກຜົນງານ ແລະ ປາກົດການຜິດພາດ ຫຼື ການລະເມີດລະບຽບກົດໝາຍ ທີ່ເກີດຂຶ້ນພາຍໃນ ຫຼື ພາກສ່ວນອື່ນກໍ່ຂຶ້ນ ພ້ອມທັງແຈ້ງຂໍ້ມູນຫລັກຖານຢັ້ງຢືນ ແລະ ລາຍງານໃຫ້ຄະນະຮັບຜິດຊອບ ບ່ອນຖືກກວດສອບຮັບຊາບ ເປັນແຕ່ລະໄລຍະ;
5. ສ້າງບົດລາຍງານການກວດສອບ;
6. ຮັບປະກັນຄວາມເປັນລະບຽບ ຂອງເອກະສານທີ່ໄດ້ກວດສອບ ບໍ່ໃຫ້ຕົກເຮ່ຍເສຍຫາຍ, ຮັບປະກັນຄວາມລັບດ້ານວິຊາຊີບ ແລະ ຫ້າມເອົາໄປນຳໃຊ້ ເພື່ອຜົນປະໂຫຍດຢ່າງອື່ນ.

## ພາກທີ IV
## ສິດ ແລະ ພັນທະຂອງເປົ້າໝາຍຖືກກວດສອບ

**ມາດຕາ 61. ສິດ ຂອງເປົ້າໝາຍຖືກກວດສອບ**

ເປົ້າໝາຍຖືກກວດສອບແຫ່ງລັດ ມີສິດຕົ້ນຕໍດັ່ງນີ້:

1. ສະເໜີໃຫ້ອົງການກວດສອບແຫ່ງລັດ ແຈ້ງການຕົກລົງກ່ຽວກັບການແຕ່ງຕັ້ງຄະນະກວດສອບ;
2. ປະຕິເສດການສະໜອງເອກະສານ ຫຼື ຂໍ້ມູນອື່ນ ທີ່ບໍ່ກ່ຽວຂ້ອງກັບເນື້ອໃນຂອງການຕົກລົງກວດສອບ;
3. ສະເໜີປ່ຽນບຸກຄົນໃນຄະນະກວດສອບ ຖ້າເຫັນວ່າ ມີການລະເມີດຂໍ້ຫ້າມ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 63 ແລະ 64 ຂອງກົດໝາຍສະບັບນີ້;
4. ປຶກສາຫາລື, ອະທິບາຍເປັນລາຍລັກອັກສອນ ກ່ຽວກັບບັນຫາທີ່ໄດ້ຍົກຂຶ້ນໃນຮ່າງບົດບັນທຶກຜົນການກວດສອບ;
5. ຍື່ນຄໍາຮ້ອງຕໍ່ອົງການກວດສອບແຫ່ງລັດ ກ່ຽວກັບການກະທໍາທີ່ເປັນການລະເມີດລະບຽບກົດໝາຍຂອງຜູ້ກວດສອບ ຫຼື ຜູ້ເຂົ້າຮ່ວມໃນການກວດສອບ ທີ່ເກີດຂຶ້ນໃນເວລາດໍາເນີນການກວດສອບ;
6. ສະເໜີກ່ຽວກັບບົດສະຫຼຸບຜົນການກວດສອບ ທີ່ຕົນເຫັນວ່າຂັດກັບລະບຽບກົດໝາຍ ຕໍ່ອົງການກວດສອບແຫ່ງລັດ ແລະ ການຈັດຕັ້ງອື່ນທີ່ກ່ຽວຂ້ອງ;
7. ທວງເອົາຄ່າເສຍຫາຍ ຍ້ອນການກະທໍາທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍຂອງຜູ້ກວດສອບ.

ສໍາລັບ ສິດຂອງເປົ້າໝາຍຖືກກວດສອບເອກະລາດ ແມ່ນປະຕິບັດຕາມຂໍ້ຜູກພັນສັນຍາກວດສອບ ລະຫວ່າງ ຜູ້ກວດສອບ ແລະ ຜູ້ຖືກກວດສອບ.

**ມາດຕາ 62. ພັນທະຂອງເປົ້າໝາຍຖືກກວດສອບ**

ເປົ້າໝາຍຖືກກວດສອບແຫ່ງລັດ ມີພັນທະຕົ້ນຕໍດັ່ງນີ້:

1. ປະຕິບັດຕາມເນື້ອໃນຂອງການຕົກລົງກວດສອບ ຢ່າງເຂັ້ມງວດ;
2. ໃຫ້ຄວາມຮ່ວມມື, ສະໜອງຂໍ້ມູນ, ເອກະສານຄົບຖ້ວນກ່ຽວກັບການກວດສອບ ຕາມການສະເໜີຂອງຄະນະກວດສອບ ແລະ ມີຄວາມຮັບຜິດຊອບ ຕໍ່ໜ້າກົດໝາຍກ່ຽວກັບຂໍ້ມູນ ແລະ ເອກະສານທີ່ຕົນສະໜອງໃຫ້;
3. ປັບປຸງ, ແກ້ໄຂຈຸດອ່ອນ, ຂໍ້ຄົງຄ້າງ ແລະ ຄວາມຜິດພາດ ຕາມທີ່ໄດ້ກໍານົດໄວ້ໃນຄໍາແນະນໍາກວດສອບຢ່າງເຂັ້ມງວດ;
4. ລາຍງານເປັນລາຍລັກອັກສອນ ກ່ຽວກັບສະພາບການຈັດຕັ້ງປະຕິບັດຄໍາແນະນໍາກວດສອບ;
5. ຮັບຜິດຊອບຕໍ່ຄວາມເສຍຫາຍ ທີ່ຕົນໄດ້ລະເມີດລະບຽບກົດໝາຍ ຫຼື ການຕົກລົງກວດສອບ;
6. ເຊັນຢັ້ງຢືນໃສ່ບົດບັນທຶກຜົນການກວດສອບ.

ສໍາລັບພັນທະ ແລະ ຄວາມຮັບຜິດຊອບ ຂອງເປົ້າໝາຍຖືກກວດສອບເອກະລາດ ແມ່ນປະຕິບັດຕາມຂໍ້ຜູກພັນສັນຍາກວດສອບ ລະຫວ່າງ ຜູ້ກວດສອບ ແລະ ຜູ້ຖືກກວດສອບ.

## ພາກທີ V
## ຂໍ້ຫ້າມໃນການເຄື່ອນໄຫວກວດສອບ

**ມາດຕາ 63. ຂໍ້ຫ້າມສໍາລັບນັກກວດສອບ**

**ຂໍ້ຫ້າມຕົ້ນຕໍ ສໍາລັບນັກກວດສອບແຫ່ງລັດ ມີດັ່ງນີ້:**

1. ລາຍງານ ກ່ຽວກັບ ວຽກງານກວດສອບບໍ່ກົງກັບຄວາມຈິງໂດຍເຈດຕະນາ;
2. ສວຍໃຊ້ຕໍາແໜ່ງ, ສິດອໍານາດ, ໜ້າທີ່ ເພື່ອຜົນປະໂຫຍດສ່ວນຕົວ;
3. ຮັບສິນບົນ;
4. ເປີດເຜີຍຄວາມລັບດ້ານວິຊາຊີບກວດສອບ ຫຼື ຂໍ້ມູນກ່ຽວກັບຜົນການກວດສອບໂດຍບໍ່ໄດ້ຮັບອະນຸຍາດ;
5. ຫາຄວາມບໍ່ຈິງ, ນາບຂູ່ ຫຼື ສ້າງຄວາມຫຍຸ້ງຍາກທີ່ບໍ່ຈໍາເປັນແກ່ເປົ້າໝາຍຖືກກວດສອບ.

ສ່ວນຂໍ້ຫ້າມ ສໍາລັບ-ñ¡¡¸©¦º®ºò©¦½ì½ Á´È-¯½ªò®ñ©ª¾´ກົດຈັນຍາບັນວິຊາຊີບກວດສອບ.

**ມາດຕາ 64. ຂໍ້ຫ້າມສໍາລັບການແຕ່ງຕັ້ງນັກກວດສອບ**

ຫ້າມແຕ່ງຕັ້ງນັກກວດສອບດັ່ງລຸ່ມນີ້ ເຂົ້າໃນຄະນະກວດສອບ ຫຼື ເປັນນັກກວດສອບອິດສະລະ :

1. ຜູ້ທີ່ມີຫຸ້ນ, ຮຸ້ນ, ຜົນປະໂຫຍດດ້ານການເງິນ ຫຼື ການພົວພັນດ້ານຜົນປະໂຫຍດອື່ນ ກັບເປົ້າໝາຍທີ່ຈະຖືກກວດສອບ;
2. ຜູ້ທີ່ເຄີຍເປັນການນໍາ, ຫົວໜ້າບັນຊີ ຫຼື ນາຍບັນຊີ ຢູ່ເປົ້າໝາຍທີ່ຈະຖືກກວດສອບມາກ່ອນ ແລະ ໄດ້ຍົກຍ້າຍອອກຈາກໜ້າທີ່ນັ້ນບໍ່ເຖິງ ຫ້າປີ;
3. ຜູ້ທີ່ເປັນຍາດພີ່ນ້ອງກັບການນໍາ, ຫົວໜ້າບັນຊີ ຫຼືນາຍບັນຊີ ຢູ່ເປົ້າໝາຍທີ່ຈະຖືກກວດສອບ.

**ມາດຕາ 65. ຂໍ້ຫ້າມສໍາລັບເປົ້າໝາຍຖືກກວດສອບແຫ່ງລັດ**

ຂໍ້ຫ້າມຕົ້ນຕໍ ສໍາລັບເປົ້າໝາຍຖືກກວດສອບແຫ່ງລັດ ມີດັ່ງນີ້:

1. ປະຕິເສດການສະໜອງຂໍ້ມູນ ແລະ ເອກະສານ ທີ່ພົວພັນກັບເນື້ອໃນຂອງການຕົກລົງກວດສອບ;
2. ລາຍງານ, ສະໜອງຂໍ້ມູນ, ເອກະສານ ທີ່ບໍ່ຖືກຕ້ອງກັບຄວາມຈິງ, ຊຸກເຊື່ອງ ຫຼື ທໍາລາຍເອກະສານ ຫຼືວັດຖຸສິ່ງຂອງ ທີ່ພົວພັນກັບການກວດສອບ;
3. ຂັດຂວາງ, ນາບຂູ່ຄະນະກວດສອບ, ຜູ້ສະໜອງຂໍ້ມູນໃຫ້ແກ່ການກວດສອບ ຫຼື ບຸກຄົນອື່ນທີ່ກ່ຽວຂ້ອງກັບການກວດສອບ;
4. ໃຫ້ສິນບົນແກ່ຄະນະກວດສອບ, ຜູ້ສະໜອງຂໍ້ມູນໃຫ້ແກ່ການກວດສອບ ຫຼື ບຸກຄົນອື່ນທີ່ກ່ຽວຂ້ອງກັບການກວດສອບ.

**ມາດຕາ 66. ຂໍ້ຫ້າມສໍາລັບການຈັດຕັ້ງ ຫຼື ບຸກຄົນອື່ນ ທີ່ບໍ່ມີສ່ວນກ່ຽວຂ້ອງກັບການກວດສອບ**

ຂໍ້ຫ້າມຕົ້ນຕໍສໍາລັບການຈັດຕັ້ງ ຫຼືບຸກຄົນອື່ນ ທີ່ບໍ່ມີສ່ວນກ່ຽວຂ້ອງກັບການກວດສອບ ມີດັ່ງນີ້:

1. ແຊກແຊງເຂົ້າໃນການກວດສອບ;

2. ນາບຂູ່ຜູ້ກວດສອບ, ຂັດຂວາງການດຳເນີນການກວດສອບ ຫຼື ປົກປ້ອງເປົ້າໝາຍຖືກກວດສອບ;
3. ຍຸຍົງໃຫ້ມີການກວດສອບ ຫຼື ໃຫ້ມີການຕ້ານການກວດສອບ ສຳລັບການກວດສອບແຫ່ງລັດ.

## ພາກທີ VI
## ການຕິດຕາມກວດກາ
## ການເຄື່ອນໄຫວວຽກງານກວດສອບ

### ມາດຕາ 67. ການກວດກາພາຍໃນ

ການກວດກາພາຍໃນ ແມ່ນການກວດກາການເຄື່ອນໄຫວກວດສອບ ໃນລະບົບການຈັດຕັ້ງຂອງການກວດສອບ.

ເພື່ອຮັບປະກັນເຮັດໃຫ້ວຽກງານກວດສອບດຳເນີນໄປໂດຍດີ, ມີປະສິດທິພາບ, ໂປ່ງໃສ ແລະ ຍຸຕິທຳນັ້ນ ຕ້ອງມີການກວດກາພາຍໃນຢ່າງເປັນປົກກະຕິ.

ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ອົງການກວດສອບແຫ່ງລັດແຕ່ລະຂັ້ນ ລວມທັງສະມາຄົມວິຊາຊີບນັກບັນຊີ ແລະ ນັກກວດສອບອິດສະລະ ຕ້ອງມີການຈັດຕັ້ງໜຶ່ງ ເພື່ອດຳເນີນວຽກງານກວດກາພາຍໃນ. ນອກຈາກນີ້ຍັງມີການແຕ່ງຕັ້ງໜ່ວຍກວດກາສະເພາະກິດ ເພື່ອດຳເນີນວຽກກວດກາພາຍໃນຢູ່ອົງການກວດສອບສູນກາງ, ອົງການກວດສອບປະຈຳພາກ ແລະ ພາຍໃນສະມາຄົມວິຊາຊີບນັກບັນຊີ ແລະ ນັກກວດສອບອິດສະລະ ແລະທີວໜ່ວຍກວດສອບອິດສະລະ.

### ມາດຕາ 68. ການຕິດຕາມກວດກາຂອງສະພາແຫ່ງຊາດ

ການຕິດຕາມກວດກາຂອງສະພາແຫ່ງຊາດ ຕໍ່ອົງການກວດສອບແຫ່ງລັດ ແມ່ນການຕິດຕາມກວດກາພາຍນອກ ຊຶ່ງດຳເນີນໂດຍກອງປະຊຸມສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ກຳມາທິການຂອງສະພາແຫ່ງຊາດ ຫຼື ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງກ່ຽວກັບການເຄື່ອນໄຫວວຽກງານ, ການຄຸ້ມຄອງ ແລະການນຳໃຊ້ທຶນຮອນຂອງອົງການກວດສອບແຫ່ງລັດ.

ໃນກໍລະນີທີ່ຈຳເປັນ ກອງປະຊຸມສະພາແຫ່ງຊາດ ຫຼື ຄະນະປະຈຳສະພາແຫ່ງຊາດ ອາດຈະແຕ່ງຕັ້ງຄະນະສະເພາະກິດເພື່ອຄົ້ນຄວ້າ, ກວດກາຄືນ ຜົນການເຄື່ອນໄຫວວຽກງານ ຂອງອົງການກວດສອບແຫ່ງລັດ.

### ມາດຕາ 69. ການກວດກາຂອງກະຊວງການເງິນ

ກະຊວງການເງິນ ເປັນຜູ້ກວດກາພາຍນອກຕໍ່ສະມາຄົມວິຊາຊີບນັກບັນຊີ ແລະ ນັກກວດສອບອິດສະລະ ແລະ ທີວໜ່ວຍກວດສອບອິດສະລະ.

### ມາດຕາ 70. ການກວດສອບພາຍນອກ

ສະມາຄົມວິຊາຊີບນັກບັນຊີ ແລະ ນັກກວດສອບອິດສະລະ ແລະ ທີວໜ່ວຍກວດສອບອິດສະລະ ຕ້ອງໄດ້ວ່າຈ້າງຜູ້ກວດສອບພາຍນອກ ເພື່ອດຳເນີນການກວດສອບເອກະສານລາຍງານການເງິນ

ປະຈຳປີຂອງຕົນ ເພື່ອຮັບປະກັນຄວາມຖືກຕ້ອງຕາມຕົວຈິງ, ຄວາມຖືກຕ້ອງຕາມລະບຽບກົດໝາຍ ແລະ ລະດັບຄວາມເຊື່ອຖືໄດ້.

## ພາກທີ VII
## ງົບປະມານ, ເຄື່ອງແບບ, ກາໝາຍ, ບັດກວດສອບ ແລະ ຕາປະທັບ

**ມາດຕາ 71. ງົບປະມານຂອງອົງການກວດສອບແຫ່ງລັດ**

ງົບປະມານຂອງອົງການກວດສອບສູນກາງ ແມ່ນຫົວໜ່ວຍງົບປະມານຂັ້ນໜຶ່ງ ຂອງງົບປະມານແຫ່ງລັດ ເພື່ອຮັບໃຊ້ເຂົ້າໃນການເຄື່ອນໄຫວກວດສອບຂັ້ນສູນກາງ. ສຳລັບງົບປະມານຂອງອົງການກວດສອບປະຈຳພາກ ແມ່ນຂຶ້ນກັບງົບປະມານຂອງອົງການກວດສອບສູນກາງ.

**ມາດຕາ 72. ເຄື່ອງແບບ, ກາໝາຍ ແລະ ບັດກວດສອບ**

ອົງການກວດສອບແຫ່ງລັດ ມີເຄື່ອງແບບ ແລະ ກາໝາຍ ຊຶ່ງແມ່ນຄະນະປະຈຳສະພາແຫ່ງຊາດເປັນຜູ້ກຳນົດ.

ນັກກວດສອບແຫ່ງລັດ ມີບັດກວດສອບ ແລະ ນັກກວດສອບອິດສະລະ ມີບັດສະມາຊິກຂອງສະມາຄົມວິຊາຊີບນັກບັນຊີ ແລະ ນັກກວດສອບອິດສະລະ.

**ມາດຕາ 73. ຕາປະທັບ**

ຕາປະທັບຂອງອົງການກວດສອບແຫ່ງລັດ ເປັນຮູບວົງມົນ, ຢູ່ກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນຢູ່ໃນຂອບວົງມົນເບື້ອງເທິງຂຽນວ່າ “ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ”, ຢູ່ເບື້ອງລຸ່ມຂຽນວ່າ “ອົງການກວດສອບສູນກາງ” ຫຼື “ອົງການກວດສອບປະຈຳພາກ” ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

ສຳລັບຕາປະທັບຂອງສະມາຄົມວິຊາຊີບນັກບັນຊີ ແລະ ນັກກວດສອບອິດສະລະ ກຳນົດໄວ້ໃນລະບຽບການສະເພາະ.

## ພາກທີ VIII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 74. ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ເປັນຕົ້ນແມ່ນການປະຕິບັດໜ້າທີ່ຂອງນັກກວດສອບ, ການເຄື່ອນໄຫວຖືກຕ້ອງ ແລະ ມີປະສິດທິຜົນຂອງເປົ້າໝາຍ

ຖືກກວດສອບ, ການໃຫ້ຄວາມຮ່ວມມື ແລະ ການສະໜອງຂໍ້ມູນກ່ຽວກັບການກວດສອບ ຈະໄດ້ຮັບການຍ້ອງຍໍ ຫຼື ປະຕິບັດນະໂຍບາຍອື່ນ ຕາມຄວາມເໝາະສົມ.

**ມາດຕາ 75. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ຫຼື ການຈັດຕັ້ງໃດ ຫາກໄດ້ລະເມີດກົດໝາຍສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍ ໃຫ້ແກ່ຜົນປະໂຫຍດຂອງລັດ, ສັງຄົມ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ປະຕິບັດວິໄນ, ປັບໃໝ ຫຼື ລົງໂທດທາງອາຍາ ຕາມກໍລະນີເບົາ ຫຼື ໜັກ ລວມທັງ ການໃຊ້ ແທນຄ່າເສຍຫາຍທາງແພ່ງ.

**ມາດຕາ 76. ມາດຕະການສຶກສາອົບຮົມ**

ບຸກຄົນໃດ ຫາກໄດ້ລະເມີດກົດໝາຍສະບັບນີ້ ກ່ຽວກັບການຄຸ້ມຄອງ, ນຳໃຊ້ທຶນຮອນຂອງລັດ ຫຼື ໃນການດຳເນີນວຽກງານຂອງຕົນ ຊຶ່ງກໍ່ຄວາມເສຍຫາຍໜ້ອຍແກ່ການຈັດຕັ້ງ ຫຼື ບຸກຄົນອື່ນ ແຕ່ມີຄວາມຈິງໃຈລາຍງານ, ຮັບສາລະພາບຕໍ່ຄວາມຜິດຂອງຕົນ ຈະຖືກສຶກສາອົບຮົມ ຫຼື ກ່າວເຕືອນ.

**ມາດຕາ 77. ມາດຕະການທາງວິໄນ ແລະ ປັບໃໝ**

ບຸກຄົນໃດ ຫາກໄດ້ລະເມີດກົດໝາຍສະບັບນີ້ ກ່ຽວກັບການຄຸ້ມຄອງ, ນຳໃຊ້ທຶນຮອນຂອງລັດ ຫຼື ໃນການດຳເນີນວຽກງານຂອງຕົນ ຊຶ່ງກໍ່ຄວາມເສຍຫາຍໜ້ອຍ ແກ່ການຈັດຕັ້ງ ຫຼື ບຸກຄົນອື່ນ ແຕ່ບໍ່ຈິງໃຈລາຍງານ, ຫຼົບຫຼີກຈາກຄວາມຜິດຂອງຕົນ:

ສຳລັບນັກກວດສອບແຫ່ງລັດ ແລະ ເປົ້າໝາຍຖືກກວດສອບທີ່ສັງກັດລັດ ຈະຖືກປະຕິບັດວິໄນຕາມແຕ່ລະກໍລະນີ ດັ່ງນີ້:

- ຕິຕຽນ, ກ່າວເຕືອນຄວາມຜິດ ພ້ອມທັງບັນທຶກໄວ້ໃນສຳນວນເອກະສານຊີວະປະຫວັດ ຂອງບຸກຄົນນັ້ນ;
- ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ ຫຼື ການຍ້ອງຍໍ;
- ປົດຕຳແໜ່ງ ຫຼື ຍົກຍ້າຍ ໄປຮັບໜ້າທີ່ອື່ນ ທີ່ມີຕຳແໜ່ງຕໍ່າກວ່າເກົ່າ;
- ໃຫ້ອອກຈາກລັດຖະການ ໂດຍບໍ່ໄດ້ຮັບນະໂຍບາຍໃດໆ.

ສ່ວນຫົວໜ່ວຍກວດສອບອິດສະລະ ແລະ ເປົ້າໝາຍຖືກກວດສອບເອກະຊົນ ກໍຈະຖືກປັບໃໝຕາມລະບຽບການ ແລະ ອາດຈະຖືກຖອນໃບອະນຸຍາດປະກອບອາຊີບ ແລະ ດຳເນີນທຸລະກິດ.

**ມາດຕາ 78. ມາດຕະການທາງແພ່ງ**

ບຸກຄົນ ຫຼື ການຈັດຕັ້ງໃດ ຫາກໄດ້ລະເມີດກົດໝາຍສະບັບນີ້ ກ່ຽວກັບ ການຄຸ້ມຄອງ, ນຳໃຊ້ທຶນຮອນຂອງລັດ ຫຼື ໃນການດຳເນີນວຽກງານຂອງຕົນ ຊຶ່ງກໍ່ຄວາມເສຍຫາຍແກ່ການຈັດຕັ້ງ ຫຼື ບຸກຄົນອື່ນຕ້ອງໄດ້ໃຊ້ແທນຄ່າເສຍຫາຍ ທີ່ຕົນໄດ້ກໍ່ຂຶ້ນຢ່າງຄົບຖ້ວນ.

**ມາດຕາ 79. ມາດຕະການທາງອາຍາ**

ບຸກຄົນໃດ ຫາກໄດ້ລະເມີດກົດໝາຍສະບັບນີ້ ກ່ຽວກັບ ການຄຸ້ມຄອງ, ນຳໃຊ້ທຶນຮອນຂອງລັດ ຫຼື ໃນການດຳເນີນວຽກງານຂອງຕົນ ຊຶ່ງເປັນການກະທຳຜິດທາງອາຍາເຊັ່ນ: ການປອມແປງຕົວເລກບັນຊີ, ການທຳລາຍເອກະສານການເງິນ ທີ່ກ່ຽວຂ້ອງກັບການກວດສອບ, ການຮັບສິນບົນ ກໍຈະຖືກລົງໂທດທາງອາຍາ ລວມທັງການໃຊ້ແທນຄ່າເສຍຫາຍທາງແພ່ງ.

## ພາກທີ IX
## ບົດບັນຍັດສຸດທ້າຍ

**ມາດຕາ 80. ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ອົງການກວດສອບແຫ່ງລັດ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 81. ຜົນສັກສິດ**

ກົດໝາຍ ສະບັບນີ້ ມີຜົນສັກສິດ ພາຍຫຼັງທີ່ກາສິບວັນ ນັບແຕ່ວັນປະທານປະເທດແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ທຸກຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

**ທອງສິງ ທຳມະວົງ**